ສງງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

25-31 ສິງຫາ 2025

ປີທີ 14

ສະບັບທີ 1031

ລາຍສັບປະດາ

## ສະຫະພັນແມ່ຍິງ ສພຊ ເຂົ້າຮ່ວມດຳເນີນຊີວິດການເມືອງທ້າຍສະໄໝທີ VIII ຂອງຄະນະບໍລິຫານງານ ສສຍລ



(ສພຊ) - ສະຫາຍ ນາງ ມະນີວັນ ເຍຍປາວເຣີ ປະທານສະຫະພັນແມ່ຍິງສະພາແຫ່ງຊາດ (ສພຊ) ສະໄໝທີ IV, ຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ (ສສຍລ) ສະໄໝທີ VIII ແລະ ສະຫາຍ ນາງ ວິໄຊ ສຣິດທິຣາດ ປະທານສະຫະພັນແມ່ຍິງສະພາແຫ່ງຊາດ ສະໄໝທີ V ໄດ້ເຂົ້າຮ່ວມກອງປະຊຸມບັ້ນດຳເນີນຊີວິດການເມືອງທ້າຍສະໄໝທີ VIII ຂອງຄະນະບໍລິ

ອ່ານຕໍ່ໜ້າ 8

## ສຈ. ປອ. ຈະເລີນ ເຍຍປາວເຣີ ພົບປະຜູ້ມີສິດເລືອກຕັ້ງຢູ່ເມືອງຫີນເຫີບ



(ສພຊ)-ວັນທີ 12-15 ສິງຫານີ້, ທ່ານ ສຈ. ປອ. ຈະເລີນ ເຍຍປາວເຣີ ຮອງປະທານສະພາແຫ່ງຊາດ (ສພຊ) ແລະ ທ່ານ ບຸນສອນ ເພັດລາວັນ ປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 10, ປະທານສະພາປະຊາຊົນແຂວງ (ສພຂ) ວຽງຈັນ ພ້ອມດ້ວຍຄະນະສະມາຊິກສະພາປະຊາຊົນ

ອ່ານຕໍ່ໜ້າ 9



ແນວຄິດປະທານ

### ໄກສອນ ພົມວິຫານ

ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ຕ້ອງເອົາໃຈໃສ່ຢ່າງເໝາະສົມ ເຖິງຜົນປະໂຫຍດຂອງບຸກຄົນຜູ້ອອກແຮງງານ ເພື່ອເຮັດແນວໃດໃຫ້ລາຍຮັບຂອງເຂົາເຈົ້າ ສາມາດທົດແທນແຮງງານທີ່ໄດ້ທຸ່ມເທອອກ ແລະ ສາມາດລ້ຽງລູກເຕົ້າໃນລະດັບປານກາງຂອງປະຊາຊົນທ້ອງຖິ່ນ; ຈາກນັ້ນ, ຈຶ່ງຈະສົ່ງເສີມລັກສະນະຫ້າວຫັນທຳການຜະລິດຂອງເຂົາເຈົ້າແລະເຮັດໃຫ້ຈິດໃຈຂອງເຂົາເຈົ້າ ຕິດພັນກັບລວມໝູ່.

(ສັງລວມບົດໂອ້ລົມຕໍ່ຂັ້ນສູນກາງ, ໜ້າ 75)

ເຊີດຊູສິດເປັນເຈົ້າປະເທດຊາດຂອງປະຊາຊົນ ດ້ວຍການການສ້າງທຸກເງື່ອນໄຂໃຫ້ເຂົາເຈົ້າໄດ້ເຂົ້າຮ່ວມໃນການວາງແນວທາງແຜນນະໂຍບາຍຂອງພັກ, ປະຕິບັດ ແລະ ກວດກາການປະຕິບັດແນວທາງແຜນນະໂຍບາຍດັ່ງກ່າວນັ້ນ ຢ່າງແທ້ຈິງ.

(ບົດໂອ້ລົມຕໍ່ກອງປະຊຸມຈັດຕັ້ງທົ່ວປະເທດ ຄັ້ງທີ 7, ໜ້າ 13)

ອ່ານຕໍ່ສະບັບໜ້າ

## ທ່ານ ຄຳໃບ ດຳລັດ ເຄື່ອນໄຫວວຽກງານຢູ່ 2 ແຂວງພາກເໜືອ



(ສພຊ)-ວັນທີ 14-15 ສິງຫານີ້, ທ່ານ ຄຳໃບ ດຳລັດ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ (ສພຊ) ພ້ອມດ້ວຍຄະນະ ໄດ້ຕິດຕາມກວດກາໂຄງການພັດທະນາທີ່ສົ່ງຜົນກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ແລະ ສິ່ງແວດລ້ອມຢູ່ແຂວງອຸດົມໄຊ ແລະ ແຂວງຫຼວງພະບາງ ໂດຍໄດ້ເປີດກອງປະຊຸມເຮັດວຽກຮ່ວມກັບບັນດາທ່ານຮອງປະທານສະພາປະຊາຊົນແຂວງ, ຮອງເຈົ້າແຂວງອຸດົມໄຊ, ຕາງໜ້າກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ຕາງໜ້າພະແນກການຂອງແຂວງຄື: ກະສິກຳ ແລະ ສິ່ງແວດລ້ອມ, ອຸດສາຫະກຳ ແລະ ການຄ້າ, ແຮງງານ ແລະ ສະຫວັດດີການສັງຄົມ, ໂຍທາທິການ ແລະ ຂົນສົ່ງ, ຄະນະໄກ່ເກຍສິ່ງກີດຂວາງທາງລົດໄຟລາວ-ຈີນ, ຄະນະຄຸ້ມຄອງເຂດເສດຖະກິດພິເສດ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ທັງນີ້, ກໍເພື່ອຕິດຕາມກວດກາການຈັດຕັ້ງປະຕິບັດຂອງ

ອ່ານຕໍ່ໜ້າ 9

## ກຜງສ ຕິດຕາມກວດກາປະຈຳປີ 2025 ຢູ່ຫຼວງນ້ຳທາ



(ສພຊ)-ວັນທີ 11-12 ສິງຫາຜ່ານມາ, ທ່ານ ປອ. ລີເບີ ລີບົວປາວ ກຳມະການສູນກາງພັກ, ປະທານກຳມາທິການແຜນການ, ການເງິນແລະກວດສອບ (ກຜງສ) ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາປະຈຳປີ 2025 ຢູ່ແຂວງຫຼວງນ້ຳທາ

ອ່ານຕໍ່ໜ້າ 9

## ປັບປຸງເນື້ອໃນຮ່າງລັດຖະບັນຍັດເຂດຍຸດທະສາດປ້ອງກັນຊາດ



ອ່ານຕໍ່ໜ້າ 8

## ຄະນະຮັບຜິດຊອບສ້າງປຶ້ມ 50 ປີ ທາລືເພື່ອເອກະພາບດ້ານເນື້ອໃນ ແລະ ເຕັກນິກຂັ້ນສຸດທ້າຍ



ອ່ານຕໍ່ໜ້າ 8



ແຫຼ່ງໂປຣຕີນ... (ໜ້າ 10)



ນາຍົກລັດຖະມົນຕີລັດ ... (ໜ້າ 11)

ວິເສດ ສະແຫວງສຶກສາ

ແຮກສ່ຽວກັບສິ່ງແວດລ້ອມ... (ໜ້າ 12)

# ປະທານ ກບຜ ເຄື່ອນໄຫວວຽກງານຢູ່ຫຼວງນ້ຳທາ




(ສພຊ)-ວັນທີ 12-13 ສິງຫາຜ່ານມາ, ທ່ານ ຄຳຈັນ ໂສຕາປະເສີດ ຄະນະປະຈຳສະພາແຫ່ງຊາດ(ຄປຈສພຊ), ປະທານກຳມາທິການບັນດາເຜົ່າ (ກບຜ) ພ້ອມດ້ວຍຄະນະ ໄດ້ຕິດຕາມກວດກາໂຄງການພັດທະນາທີ່ສົ່ງຜົນກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ແລະ ສິ່ງແວດລ້ອມ ຢູ່ແຂວງຫຼວງນ້ຳທາ ໂດຍໄດ້ເຂົ້າພົບທ່ານ ວຽງສະຫວັດ ສີພັນດອນ ກຳມະການສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງຫຼວງນ້ຳທາເພື່ອແຈ້ງຈຸດປະສົງໃນການເຄື່ອນໄຫວວຽກງານຄັ້ງນີ້ ແລະ ຮັບຟັງຈຸດພິເສດການພັດທະນາເສດຖະກິດຂອງແຂວງ ພ້ອມທັງເປີດກອງປະຊຸມຢູ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ເຊິ່ງມີບັນດາທ່ານຕາງໜ້າພະແນກການຂອງແຂວງຄື: ກະສິກຳ ແລະ ສິ່ງແວດລ້ອມ, ອຸດສາຫະກຳ ແລະ ການຄ້າ, ແຮງງານ ແລະ ສະຫວັດດີການສັງຄົມ, ຄະນະຄຸ້ມຄອງເຂດເສດຖະກິດພິເສດບໍ່ເຕັນ, ສຳນັກງານເມືອງວຽງພູຄາ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມ.

ຈຸດປະສົງແມ່ນເພື່ອຕິດຕາມກວດກາການຈັດຕັ້ງປະຕິບັດຂອງບັນດາໂຄງການພັດທະນາເສດຖະກິດ-ສັງຄົມ ທີ່ມີຜົນກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ແລະ ສິ່ງແວດລ້ອມ ໂດຍສະເພາະແມ່ນຜົນກະທົບຈາກໂຄງການຂຸດຄົ້ນແຮ່ທາດ ຕິດພັນກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ ແລະ ເພື່ອເກັບກຳຂໍ້ມູນສະພາບຕົວຈິງຢູ່ຂົງເຂດທີ່ໄດ້ຮັບຜົນກະທົບຈາກໂຄງການພັດທະນາ, ພື້ນທີ່ທຳການຜະລິດ, ນ້ຳກິນນ້ຳໃຊ້ບໍ່ພຽງພໍ, ນິເວດວິທະຍາ, ຄວາມອຸດົມສົມບູນຂອງຊັບພະຍາກອນທຳມະຊາດ ກໍຄືການທົດແທນຄ່າເສຍຫາຍ, ການປັບປຸງຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ນຳມາວິເຄາະວິໄຈ ແລະ ສັງລວມລາຍງານຕໍ່ກອງປະຊຸມ ຄປຈສພຊ ເພື່ອສະເໜີທິດທາງ, ວິທີການ ແລະ ມາດຕະການ ໃຫ້ລັດຖະບານ ກໍຄືຂະແໜງການທີ່ກ່ຽວຂ້ອງ ປັບປຸງແກ້ໄຂ.

ກອງປະຊຸມໄດ້ຕີລາຄາຄືນການຈັດຕັ້ງປະຕິບັດມະຕິ ສພຊ ໃນວຽກງານກະສິກຳປ່າໄມ້ ແລະ ສິ່ງແວດລ້ອມ, ອຸດສາຫະກຳ ແລະ ການຄ້າ, ແຮງງານ ແລະ ສະຫວັດດີການສັງຄົມ, ການຄຸ້ມຄອງດ່ານສາກົນ, ການແກ້ໄຂຊົດເຊີຍຜົນກະທົບຈາກໂຄງການຂຸດຄົ້ນຖ່ານຫີນຢູ່ເມືອງວຽງພູຄາ, ການແກ້ໄຂຊ່ວຍເຫຼືອສຸກເສີນໄພນ້ຳຖ້ວມ ແລະ ແຜນການຊ່ວຍເຫຼືອໄລຍະຍາວ, ການແກ້ໄຂບັນຫາສາສະໜາ ເພື່ອໃຫ້ມີຄວາມປອງດອງ ແລະ ສອດຄ່ອງຕາມລະບຽບກົດໝາຍ.

ຈາກນັ້ນ, ຄະນະທີມງານຈາກ ສພຊ ແລະ ສພຂ ຍັງໄດ້ລົງເບິ່ງເຂດທີ່ໄດ້ຮັບຜົນກະທົບຈາກການຂຸດຄົ້ນຖ່ານຫີນຂອງບໍລິສັດ ບົວໄລ ມັງກອນທອງ ຢູ່ເມືອງວຽງພູຄາ.

**(ນາງ ກຸກກິກ ບຸດດາໄຊ)**




# ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນຢູ່ເມືອງໝື່ນ



(ສພຂ)-ວັນທີ 12-14 ສິງຫາຜ່ານມາ, ທ່ານ ປອ. ພູທອນ ວໍລະເພັດ ຮອງປະທານກຳມາທິການກົດໝາຍ ທັງເປັນສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 10 ແຂວງວຽງຈັນ ພ້ອມດ້ວຍສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງໝື່ນ ມີທ່ານ ນາງ ວອນປາໄຊ ຄະນະປະຈຳພັກເມືອງ, ປະທານກວດກາພັກ-ລັດເມືອງ ແລະ ທ່ານບົວແກ້ວ ພອນໄຊສະຫວັດ ໄດ້ລົງພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ9ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສະພາປະຊາຊົນແຂວງ (ສພຂ) ວຽງຈັນ ຊຸດທີ II ຢູ່ 4 ບ້ານຂອງເມືອງໝື່ນ: ກ້ອນຄຳ, ນາຕາດ, ນ້ຳເພີນ, ນ້ຳເລົ້າ ແລະ ສຳນັກງານປົກຄອງເມືອງ ໂດຍການຕ້ອນຮັບຂອງທ່ານ ສອນໄຊ ຫຼວງອາໄພ ເລຂາພັກເມືອງ ພ້ອມດ້ວຍຄະນະປະຈຳພັກ, ຫົວໜ້າ-ຮອງຫົວໜ້າຫ້ອງການຕະຫຼອດຮອດພະນັກງານ-ລັດຖະກອນພາຍໃນເມືອງ ເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ສອນໄຊ ຫຼວງອາໄພ ໄດ້ລາຍງານສະພາບການຈັດຕັ້ງປະຕິບັດວຽກງານຮອບດ້ານຂອງອົງການປົກຄອງເມືອງໝື່ນໃນໄລຍະຜ່ານມາ. ຈາກນັ້ນ, ທ່ານ ປອ. ພູທອນ ວໍລະເພັດ ໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ ເຊິ່ງໄດ້ພິຈາລະນາ, ຮັບຮອງເອົາບັນດາເນື້ອໃນວຽກງານສຳຄັນຕ່າງໆເປັນຕົ້ນ: ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 6 ເດືອນຕົ້ນປີ 2025; ບົດລາຍງານການເຄື່ອນໄຫວວຽກງານແຕ່ກອງປະຊຸມສະໄໝສາມັນເທື່ອທີ 8-9 ແລະ ທິດທາງແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 10 ຂອງ ສພຊ; ການສ້າງ ແລະ ປັບປຸງກົດໝາຍ 10 ສະບັບ ໃນນີ້, ສ້າງໃໝ່ 5 ສະບັບ. ທ່ານ ນາງ ວອນປາໄຊ ກໍໄດ້ເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາປະຊາຊົນແຂວງ ທີ່ໄດ້ພິຈາລະນາ, ຮັບຮອງເອົາບັນຫາສຳຄັນຕ່າງໆຄື: ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານຂອງແຂວງ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2025; ສະພາບການພົ້ນເດັ່ນທີ່ເປັນທາງສຽງສັງຄົມ; ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2025 ຂອງສານປະຊາຊົນ ແລະ ອົງການໄອຍະການປະຊາຊົນແຂວງ; ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຂອງ ສພຂ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2025; ການຮັບຮອງເອົາບຸກຄະລາກອນຂອງແຂວງ.

ນອກນີ້, ຍັງໄດ້ຮັບຟັງຄຳສະເໜີ, ຄວາມຂັດຂ້ອງໝອງໃຈຂອງພະນັກງານ-ລັດຖະກອນ, ທະຫານຕຳຫຼວດ ແລະ ປະຊາຊົນຜູ້ມີສິດເລືອກຕັ້ງ ເພື່ອນຳໄປຄົ້ນຄວ້າ, ພິຈາລະນາ ແລະ ສະເໜີຕໍ່ໃຫ້ບັນດາຂະແໜງການທີ່ກ່ຽວຂ້ອງ ຄົ້ນຄວ້າແກ້ໄຂຕາມລະບຽບການ.

**(ນາງ ວັນນາ)**

# ຮອງປະທານ ກປຊສ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ ຢູ່ໄຊສົມບູນ



(ສພຊ) - ວັນທີ 13 ສິງຫາຜ່ານມາ, ທ່ານ ພົຈວ. ສົມວັນ ທຳມາໄຊ ຮອງປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ກປຊສ) ພ້ອມດ້ວຍສະມາຊິກສະພາປະຊາຊົນແຂວງ ແລະ ຄະນະ ໄດ້ເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສະພາປະຊາຊົນແຂວງ (ສພຂ) ໄຊສົມບູນ ຊຸດທີ II ຢູ່ກອງບັນຊາການທະຫານແຂວງ ແລະ ໂຮງຮຽນເຫຼົ່າຮົບພະລາທິການກອງທັບແຂວງໄຊສົມບູນ, ເຂົ້າຮ່ວມຮັບຟັງມີບັນດາຄະນະພັກ-ຄະນະບັນຊາ, ພະນັກງານ, ນາຍ ແລະ ພົນທະຫານ ລວມ 2 ຈຸດ ມີທັງໝົດ 176 ສະຫາຍ, ຍິງ 18 ສະຫາຍ.

ຫົວໜ້າກອງບັນຊາການທະຫານແຂວງ ແລະ ອຳນວຍການໂຮງຮຽນເຫຼົ່າຮົບພະລາທິການກອງທັບແຂວງໄຊສົມບູນ ໄດ້ລາຍງານສະພາບການເຄື່ອນໄຫວຂອງກົມກອງໂດຍຫຍໍ້ ໂດຍສະເພາະແມ່ນຈຸດທີ່ຕັ້ງ, ພາລະບົດບາດ, ຜົນສຳເລັດໃນການຈັດຕັ້ງປະຕິບັດແຕ່ລະຂົງເຂດວຽກງານ ເປັນຕົ້ນວຽກງານການເມືອງ, ການທະຫານ ແລະ ພະລາທິການ; ຈາກນັ້ນ, ສະມາຊິກສະພາ ໄດ້ຜັດປ່ຽນກັນເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງໄຊສົມບູນ ພ້ອມທັງໃຫ້ຮູ້ເຖິງພາລະບົດບາດ, ສິດ ແລະ ໜ້າທີ່ຂອງ ສພຊ ແລະ ສພຂ, ແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ, ເນື້ອໃນຂອງ 2 ວາລະແຫ່ງຊາດ ຄື: ການແກ້ໄຂບັນຫາຂໍ້ຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ການສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ໃຫ້ຖັນແຖວນາຍ ແລະ ພົນທະຫານ ໄດ້ຮັບຮູ້ເຂົ້າໃຈຢ່າງກວ້າງຂວາງ, ທົ່ວເຖິງ ແລະ ຖືກຕ້ອງ ກ່ຽວກັບບັນດາບັນຫາສຳຄັນພື້ນຖານຂອງປະເທດຊາດ, ຂອງແຂວງ ທີ່ໄດ້ນຳມາພິຈາລະນາ ແລະ ຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 9 ເພື່ອນຳໄປຈັດຕັ້ງຜັນຂະຫຍາຍເຂົ້າໃນວຽກງານຕົວຈິງຂອງແຕ່ລະພາກສ່ວນ ໃຫ້ມີຄວາມສອດຄ່ອງ, ເໝາະສົມ ແລະ ປະຕິບັດໃຫ້ປາກົດຜົນເປັນຈິງ. ພ້ອມດຽວກັນ, ຍັງໄດ້ຮັບຟັງການສະເໜີບາງບັນຫາຈາກນາຍ ແລະ ພົນທະຫານ ອີກດ້ວຍ.

ໂອກາດນີ້, ທ່ານ ພົຈວ. ສົມວັນ ທຳມາໄຊ ໄດ້ມີຄຳເຫັນເນັ້ນໜັກໃຫ້ເອົາໃຈໃສ່ການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ການຄຸ້ມຄອງທັບ-ຄຸ້ມຄອງລັດ-ຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍລັດຖະທຳມະນູນ ແລະ ກົດໝາຍໃນຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເພື່ອປະກອບສ່ວນເຮັດໃຫ້ບັນຫາທີ່ຍັງພົບຄວາມຫຍຸ້ງຍາກ, ອຸດຕັນ ໄດ້ຮັບການແກ້ໄຂໃຫ້ດີຂຶ້ນເທື່ອລະກ້າວ.

# ພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດ ກອງປະຊຸມສະໄໝສາມັນ ຢູ່ເມືອງອາດສະພັງທອງ



(ສພຊ) - ວັນທີ 14-15 ສິງຫາຜ່ານມາ, ທ່ານ ຈັນທະວົງ ແສນອາມາດມົນຕີ ຮອງປະທານກຳມາທິການການຕ່າງປະເທດ ທັງເປັນສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 13 ພ້ອມດ້ວຍບັນດາທ່ານສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງອາດສະພັງທອງ ໄດ້ພົບປະຜູ້ມີສິດເລືອກຕັ້ງ ແລະເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ9ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສະພາປະຊາຊົນແຂວງ (ສພຂ) ສະຫວັນນະເຂດ ຊຸດທີ II ໂດຍການຕ້ອນຮັບຂອງທ່ານ ສີສະຫວາດ ເພັງທະລັງສີ ກຳມະການພັກແຂວງ, ເລຂາຄະນະບໍລິຫານງານພັກເມືອງ, ມີຄະນະບໍລິຫານງານພັກເມືອງ, ອຳນາດການປົກຄອງບ້ານຕະຫຼອດຮອດປະຊາຊົນຜູ້ມີສິດເລືອກຕັ້ງ ເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານເນດຄຳ ສຸດທະລັກ ຮອງເລຂາພັກເມືອງ, ວ່າການເຈົ້າເມືອງແລະອຳນາດການປົກຄອງແຕ່ລະບ້ານ ໄດ້ລາຍງານໂດຍຫຍໍ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງເມືອງ ແລະ ບັນດາບ້ານ. ຈາກນັ້ນ, ທ່ານ ຈັນທະວົງ ແສນອາມາດມົນຕີ ໄດ້ເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 9 ຂອງ ສພຊ ເຊິ່ງໄດ້ພິຈາລະນາຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດ ໂດຍອອກເປັນມະຕິ 15 ສະບັບ ໃນນັ້ນມີການສ້າງ ແລະ ປັບປຸງກົດໝາຍ 10 ສະບັບ (ສ້າງໃໝ່ 5 ສະບັບ). ສສຂ ກໍຜັດປ່ຽນກັນເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 9 ຂອງ ສພຂ ໂດຍໄດ້ພິຈາລະນາບັນຫາສຳຄັນພື້ນຖານຂອງແຂວງ ເຊິ່ງອອກເປັນມະຕິ 5 ສະບັບ ຮັບຮອງເອົາຄື: ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2025; ຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດໃນສະຖານການສຶກສາທົ່ວແຂວງ, ຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການຄຸ້ມຄອງແຜນຜັງນະຄອນໄກສອນພົມວິຫານ, ຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການຄຸ້ມຄອງແຜນຜັງເມືອງອຸທຸມພອນ; ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານແຕ່ກອງປະຊຸມສະໄໝສາມັນເທື່ອທີ 8-9 ແລະ ທິດທາງແຜນການເຄື່ອນໄຫວຮອດກອງປະຊຸມທ້າຍສະໄໝຂອງ ສພຂ.

ພ້ອມກັນນັ້ນ, ກໍເປີດໂອກາດໃຫ້ການນຳເມືອງ, ການຈັດຕັ້ງບ້ານກໍຄືປະຊາຊົນໃນແຕ່ລະບ້ານ ສະເໜີບັນຫາທີ່ມີຄວາມຂັດຂ້ອງໝອງໃຈ ເປັນຕົ້ນແມ່ນພື້ນຖານໂຄງລ່າງທີ່ເປ່ເພ ເພື່ອໃຫ້ຂັ້ນເທິງພິຈາລະນາແກ້ໄຂ; ການເຄື່ອນໄຫວຄັ້ງນີ້, ຍັງໄດ້ມອບອຸປະກອນການຮຽນໃຫ້ການຈັດຕັ້ງບ້ານ ເພື່ອນຳໄປແຈກຢາຍແກ່ນ້ອງນັກຮຽນຕາມຄວາມເໝາະສົມ ເພື່ອປະກອບສ່ວນຊຸກຍູ້, ສົ່ງເສີມວຽກງານສຶກສາທິການ ແລະ ກິລາຢູ່ຂັ້ນທ້ອງຖິ່ນ.

**(ໂຢດນ້ອຍ ວັນທະຍາ)**

# ມອບໃບຍໍຍ້ອງໃຫ້ບໍລິສັດອຸປະຖຳ ກອງປະຊຸມສະໄໝສາມັນເທື່ອທີ 9



(ສພຊ) - ຕອນບ່າຍວັນພະຫັດທີ 14 ສິງຫາຜ່ານມາ ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີພິທີມອບ-ຮັບໃບຍ້ອງຍໍຂອງຄະນະປະຈຳສະພາແຫ່ງຊາດ ໃຫ້ແກ່ບັນດາບໍລິສັດທີ່ອຸປະຖຳກອງປະຊຸມສະໄໝສາມັນເທື່ອທີ 9 ຂອງ ສພຊ ຊຸດທີ IX, ຕາງໜ້າມອບໂດຍທ່ານ ປອ. ອາຄົມ ປຣະເສີດ ຮອງເລຂາທິການສະພາແຫ່ງຊາດ ແລະ ຕາງໜ້າຮັບໂດຍທ່ານ ສີ ກົວເສີງ ຜູ້ອຳນວຍການບໍລິສັດ ລາວຄິວໄທ ເຕັກໂນໂລຊີວິສະວະກຳ ຈຳກັດ, ຕາງໜ້າບໍລິສັດ ຮຸ່ງອາລຸນ ບໍ່ແຮ່ ຈຳກັດ ແລະ ບໍລິສັດ ໄທຍວນ ເຊິ່ງມີພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມເປັນສັກຂີພະຍານ; ໂອກາດນີ້, ທ່ານ ປອ. ອາຄົມ ປຣະເສີດ ໄດ້ສະແດງຄວາມຂອບໃຈຕໍ່ບັນດາບໍລິສັດທີ່ອຸປະຖຳໃນຄັ້ງນີ້ ທັງແຈ້ງໃຫ້ຊາບກ່ຽວກັບການກະກຽມກອງປະຊຸມສະໄໝສາມັນເທື່ອທີ 10 ຂອງ ສພຊ ຊຸດທີ IX ແລະ ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ໃນຕົ້ນປີ 2026.

**(ນາງ ກຸກກິກ ບຸດດາໄຊ)**



# ໂຮງຮຽນເຄເອັນຊີ ຢ້ຽມຊົມຫ້ອງ ມູນເຊື້ອ ແລະ ຫ້ອງປະຊຸມໃຫຍ່



ສພຊ) - ຕອນສວາຍວັນສຸກທີ 15 ສິງຫານີ້, ກົມສື່ມວນຊົນ ແລະ ຫ້ອງການຄຸ້ມຄອງຫໍສະພາແຫ່ງຊາດ (ສພຊ) ໄດ້ຕ້ອນຮັບແລະນຳພານັກຮຽນໂຮງຮຽນເຄເອັນຊີ ທີ່ມາທັດສະນະສຶກສາຢ້ຽມຊົມຫໍມູນເຊື້ອ ຈຳນວນ 23 ຄົນ ເຊິ່ງນຳໂດຍທ່ານ ນາງ ຈອມເພັດ ໄຊມູນວົງ ຮອງຜູ້ອຳນວຍການໂຮງຮຽນເຄເອັນຊີ.

ການມາທັດສະນະສຶກສາຄັ້ງນີ້, ໄດ້ຮັບຟັງການບັນລະຍາຍໂດຍຫຍໍ້ເຫດການຕ່າງໆໃນປະຫວັດສາດ, ຢ້ຽມຊົມການວາງສະແດງຮູບພາບ ແລະ ວັດຖຸພັນຕ່າງໆ, ຊົມຮູບເງົາປະຫວັດຄວາມເປັນມາຂອງສະພາປະຊາຊົນສູງສຸດຊຸດທີ I ເຖິງສະພາແຫ່ງຊາດຊຸດປັດຈຸບັນ (ຊຸດທີ IX) ແລະ ນ້ອງນັກຮຽນໄດ້ຕອບຄຳຖາມເພື່ອຮັບປຶ້ມທີ່ລະນຶກຈາກ ສພຊ. ຈາກນັ້ນ, ຍັງໄດ້ຢ້ຽມຊົມຫ້ອງປະຊຸມໃຫຍ່ຂອງສະພາແຫ່ງຊາດ ເຮັດໃຫ້ນ້ອງໆນັກຮຽນ, ຄູ-ອາຈານ ມີຄວາມຮັບຮູ້ເຂົ້າໃຈກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງອົງການນິຕິບັນຍັດຫຼາຍຂຶ້ນ.

**(ນາງ ນິດຕາ ຄູນປາກດີ)**

# ສຳມະນາເສດຖະກິດດິຈິຕອນ ແລະ ຊັບສິນດິຈິຕອນ




(ສພຊ) - ຕອນບ່າຍວັນສຸກທີ 15 ສິງຫາຜ່ານມາ ທີ່ສະພາແຫ່ງຊາດ ໄດ້ມີກອງປະຊຸມສຳມະນາເສດຖະກິດດິຈິຕອນ ແລະຊັບສິນດິຈິຕອນ(Digital Asset) ໂດຍການເປັນປະທານຮ່ວມຂອງທ່ານ ປອ. ອະລຸນຍະເດດ ຮາຊະພົນ ຫົວໜ້າກົມເສດຖະກິດບໍລິການ, ກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ກສຕສ) ແລະ ທ່ານ ປະສິດທິເດດ ຫຼວງວິໄລ ຮອງຫົວໜ້າກົມເຕັກໂນໂລຊີດິຈິຕອນ, ກະຊວງເຕັກໂນໂລຊີ ແລະ ການສື່ສານ ເຊິ່ງມີບັນດາທ່ານຮອງຫົວໜ້າກົມໃນກສຕສ, ຮອງອຳນວຍການບໍລິສັດ ບິດຄິກ ຈຳກັດຜູ້ດຽວ, ຮອງອຳນວຍການບໍລິສັດ ບິກ ດາຕາ ຄຣິບໂຕ ມາຍນິງ ຈຳກັດຜູ້ດຽວ ແລະ ແຂກຖືກເຊີນ ເຂົ້າຮ່ວມ; ທັງນີ້, ກໍເພື່ອໃຫ້ພະນັກງານຈາກກົມເສດຖະກິດບໍລິການ ແລະ ກົມເຕັກໂນໂລຊີດິຈິຕອນ ຮັບຮູ້ໃນວຽກງານການຫັນເປັນດິຈິຕອນຂອງສປປລາວ ໃນຍຸກປັດຈຸບັນ ເປັນຕົ້ນແມ່ນທ່າອ່ຽງຂອງການພັດທະນາເສດຖະກິດດິຈິຕອນ ແລະ ການນຳໃຊ້ເຕັກໂນໂລຊີດິຈິຕອນ ແລະ ລະບົບເຕັກໂນໂລຊີດິຈິຕອນເພື່ອສ້າງເສດຖະກິດດິຈິຕອນ, ຊັບສິນດິຈິຕອນ.

ກອງປະຊຸມໄດ້ຮັບຟັງການນຳສະເໜີທ່າອ່ຽງຂອງສາກົນດ້ານການພັດທະນາເສດຖະກິດດິຈິຕອນ ແລະ ການນຳໃຊ້ເຕັກໂນໂລຊີດິຈິຕອນແລະການແນະນຳລະບົບເຕັກໂນໂລຊີດິຈິຕອນ ເພື່ອສ້າງເສດຖະກິດດິຈິຕອນ, ຊັບສິນດິຈິຕອນ ຈາກບໍລິສັດ ບິດຄິກ ຈຳກັດຜູ້ດຽວ; ຄວາມເປັນມາຂອງບໍລິສັດ ບິກ ດາຕາ ຄຣິບໂຕ ມາຍນິງ ຈຳກັດຜູ້ດຽວ. ຈາກນັ້ນ, ໄດ້ມີການສົນທະນາແລກປ່ຽນການເກັບກຳຂໍ້ມູນ ແລະ ບົດຮຽນເຊິ່ງກັນແລະກັນ ເພື່ອນຳບົດຮຽນດັ່ງກ່າວໄປໝູນໃຊ້ເຂົ້າໃນວຽກງານຕົວຈິງ.

**(ສອນສັກ ວັນວິໄຊ)**

# ສສຊ ແລະ ສສຂ ເມືອງຊຳເໜືອ ເຜີຍແຜ່ ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 9



(ສພຂ) - ວັນທີ 5-6 ແລະ 8 ສິງຫາຜ່ານມາ ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ຫົວພັນ ໄດ້ຈັດພິທີເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ9 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສພຂ ຊຸດທີ II ນຳໂດຍທ່ານ ສີຄຳ ບຸນມີໄຊ ຮອງປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 8 ພ້ອມ ດ້ວຍສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງຊຳເໜືອ, ມີບັນດາທ່ານຫົວໜ້າ-ຮອງຫົວ ໜ້າພະແນກການ-ອົງການທຽບເທົ່າ, ຄະນະຈັດຕັ້ງ, ຄະນະໂຄສະນາອົບຮົມ, ຫ້ອງວ່າການ, ອົງການກວດກາລັດ, ສານປະຊາຊົນ ແລະ ອົງການໄອຍະການປະຊາຊົນ, ແນວລາວສ້າງຊາດແລະອົງການຈັດຕັ້ງມະຫາຊົນ, ຄະນະພັກ-ຄະນະ ນຳ 2 ກອງບັນຊາການ ຕະຫຼອດຮອດພະນັກງານ-ລັດຖະກອນໃນຂົງເຂດເສດຖະກິດ, ວັດທະນະທຳ-ສັງຄົມ, ຍຕິທຳ, ປກຊ-ປກສ ແລະ ການເມືອງ ຂອງແຂວງເຂົ້າຮ່ວມຮັບຟັງຢ່າງພ້ອມພຽງ.

ບັນດາທ່ານ ສສຊ ແລະ ສສຂ ໄດ້ຜັດປ່ຽນກັນນຳເອົາເນື້ອໃນຈິດໃຈຜົນສຳເລັດຂອງສອງກອງປະຊຸມດັ່ງກ່າວ ເຜີຍແຜ່ໃຫ້ຜູ້ເຂົ້າຮ່ວມໄດ້ຮັບຮູ້ເຊິ່ງກອງປະຊຸມສະໄໝສາມັນເທື່ອທີ9ຂອງສະພາແຫ່ງຊາດ ໄດ້ພິຈາລະນາ, ຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດໂດຍອອກເປັນມະຕິ 15 ສະບັບ ໃນນັ້ນ, ມີການສ້າງແລະປັບປຸງກົດໝາຍ 10 ສະບັບ (ສ້າງໃໝ່5ສະບັບ), ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກແຕ່ກອງປະຊຸມສະໄໝສາມັນເທື່ອທີ8ຫາເທື່ອທີ 9 ແລະ ທິດທາງແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 10 ຂອງ ສພຊ ແລະ ວຽກງານອື່ນໆຂອງລັດຖະບານ; ກອງປະຊຸມສະໄໝສາມັນເທື່ອທີ9ຂອງສະພາປະຊາຊົນແຂວງ ໄດ້ພິຈາລະນາ, ຮັບຮອງເອົາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ ແລະ ທິດທາງ ແຜນການວຽກງານຈຸດສຸມ 6 ເດືອນທ້າຍປີ 2025, ການປັບປຸງກົງຈັກການຈັດຕັ້ງຂອງອົງການປົກຄອງແຂວງ, ຂໍ້ຕົກລົງຂອງທ່ານເຈົ້າແຂວງວ່າດ້ວຍກອງທຶນກິລາ-ກາຍະກຳ (ປັບປຸງ), ຂໍ້ຕົກລົງຂອງທ່ານເຈົ້າແຂວງວ່າດ້ວຍການກຳນົດຫຼັກການຄິດໄລ່ທົດແທນຄ່າເສຍຫາຍທີ່ຖືກຜົນກະທົບຈາກໂຄງການພັດທະນາຕ່າງໆຢູ່ແຂວງ, ການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ2025ຂອງສພຂ.ພ້ອມດຽວກັນນີ້, ຍັງເປີດໂອກາດໃຫ້ຜູ້ເຂົ້າຮ່ວມ ໄດ້ສະເໜີຂໍ້ຂ້ອງໃຈເພື່ອເປັນການແລກປ່ຽນບັນຫາຕ່າງໆ ທີ່ຕິດພັນກັບການດຳລົງຊີວິດທີ່ຍັງພົບຄວາມຫຍຸ້ງຍາກ ເພື່ອເປັນຂໍ້ມູນໃຫ້ ສສຊ ແລະ ສສຂ ນຳໄປຄົ້ນຄວ້າ ແລະ ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ພິຈາລະນາ ແລະ ແກ້ໄຂຕາມຄວາມເໝາະສົມ.



# ມອບຄອມພິວເຕີ ໃຫ້ 2 ພາກສ່ວນ ຢູ່ເມືອງຜາໄຊ ແລະ ເມືອງຄູນ



(ສພຂ) - ວັນທີ 30 ກໍລະກົດ - 1 ສິງຫາຜ່ານມາ, ທ່ານ ນາງ ສິດທິດາ ທິບມູນຕາລີ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກທີ 9 ແຂວງຊຽງຂວາງ, ຮອງປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ພ້ອມດ້ວຍພະນັກງານຈາກສະພາປະຊາຊົນແຂວງ(ສພຂ)ໄດ້ໄປມອບຄອມພິວເຕີຕັ້ງໂຕະ 1 ຊຸດ ລວມມູນຄ່າ 15 ລ້ານກີບ ໃຫ້ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງຜາໄຊ ແລະ ມອບຄອມພິວເຕີຕັ້ງຕັກ 1 ເຄື່ອງ ມູນຄ່າ 15 ລ້ານກີບ ໃຫ້ສະຫະພັນນັກຮົບເກົ່າເມືອງຄູນເຊິ່ງໄດ້ຮັບການອຸປະຖຳຈາກບໍລິສັດ ເພັດໄລພອນ; ກ່າວຮັບໂດຍທ່ານ ພອນສະໄໝ ພວງຄຳຫວັງ ຮອງເລຂາພັກເມືອງຜາໄຊ ຜູ້ຊີ້ນຳວຽກງານວັດທະນະທຳ-ສັງຄົມ ແລະ ທ່ານ ຄຳຫຼ້າ ໄຊຍະວົງ ຄະນະປະຈຳພັກເມືອງຄູນ, ປະທານແນວລາວສ້າງຊາດເມືອງ, ເຂົ້າຮ່ວມເປັນສັກຂີພະຍານ ມີທ່ານຫົວໜ້າຫ້ອງການແຮງງານແລະສະຫວັດດີການສັງຄົມເມືອງຜາໄຊ, ທ່ານປະທານສະຫະພັນນັກຮົບເກົ່າເມືອງຄູນ ພ້ອມດ້ວຍພະນັກງານຈາກສອງພາກສ່ວນ.

ໂອກາດນີ້, ທ່ານ ນາງ ສິດທິດາ ທິບມູນຕາລີ ໄດ້ມີຄຳເຫັນວ່າ: ການມອບຄອມພິວເຕີຄັ້ງນີ້ເປັນການປະກອບສ່ວນເຂົ້າໃນການປະຕິບັດໜ້າທີ່ວຽກງານ ແລະ ຈຶ່ງນຳໃຊ້ໃຫ້ສອດຄ່ອງ ແລະ ເໝາະສົມກັບຄວາມຮຽກຮ້ອງຕ້ອງການໃນການປະຕິບັດວຽກງານຂອງຕົນ ໃຫ້ສະດວກຍິ່ງຂຶ້ນກວ່າເກົ່າ ແລະຊ່ວຍກັນປົກປັກຮັກສາ, ຊົມໃຊ້ໃຫ້ໄດ້ຍາວນານ; ສອງພາກສ່ວນໄດ້ສະແດງຄວາມຂອບໃຈ ສສຊ ກໍຄື ສພຂ ທີ່ຊ່ວຍແບ່ງເບົາງົບປະມານ, ພ້ອມທັງໃຫ້ຄຳໝັ້ນສັນຍາວ່າ ຈະນຳໃຊ້ອຸປະກອນດັ່ງກ່າວ ເຂົ້າໃນໜ້າທີ່ວຽກງານລວມໃຫ້ເກີດປະໂຫຍດສູງສຸດ ແລະ ປົກປັກຮັກສາໃຫ້ໄດ້ໃຊ້ຢ່າງຍາວນານ.

**(ນາງ ສຸກສະຫວັນ ອິນທະແສງ)**



# ປະເມີນຜົນເສຍຫາຍຈາກໄພພິບັດນ້ຳຖ້ວມຢູ່ບ້ານພຽງຫີ່ງ



(ສພຂ)-ວັນທີ27-28 ກໍລະກົດຜ່ານມາ, ທ່ານ ວຽງໄຊ ສີວິໄລ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງ (ສພຂ) ຊຽງຂວາງພ້ອມດ້ວຍຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ, ເມືອງ ແລະ ປກຊ ໄດ້ລົງກວດກາພື້ນທີ່ຕົວຈິງ ເພື່ອປະເມີນຜົນເສຍຫາຍຈາກໄພພິບັດນ້ຳຖ້ວມຢູ່ບ້ານພຽງຫີ່ງ ເມືອງໜອງແຮດ ໂດຍໄດ້ຮັບຟັງການລາຍງານຈາກທ່ານ ທອງບົວ ໄມຄຳບຸນ ອະດີດຄະນະບໍລິຫານງານພັກເມືອງ, ອະດີດເລຂາພັກກຸ່ມບໍເຍຍ, ແນວໂຮມບ້ານພຽງຫີ່ງ ໃຫ້ຮູ້ວ່າ: ເວລາປະມານ 18:00 ໂມງຂອງວັນທີ22 ກໍລະກົດ ໄດ້ແຈ້ງທາງໂທລະໂຄ່ງບ້ານ ເພື່ອໃຫ້ປະຊາຊົນຮັບມືກັບໄພນ້ຳຖ້ວມ ແລະ ຮີບຮ້ອນຍົກຍ້າຍເຄື່ອງຂອງຂຶ້ນບ່ອນສູງ, ຫຼັງຈາກນັ້ນ 19:30 ໂມງ ນ້ຳໃຫຍ່ໄດ້ລຶບບ້ານ ໄຫຼຊຸເຮືອນຊານຢ່າງໄວວາໂດຍຕັ້ງຕົວບໍ່ທັນ ເຮັດໃຫ້ຊັບສິນ, ເຮືອນຊານ, ສັດລ້ຽງຂອງປະຊາຊົນເສຍຫາຍໝົດ; ຈາກການເກັບກຳຂໍ້ມູນເບື້ອງຕົ້ນຜົນເສຍຫາຍຄັ້ງນີ້ຄື: ທົ່ວບ້ານພຽງຫີ່ງ ມີ113 ຄອບຄົວ ໄດ້ຮັບຜົນກະທົບ 67 ຄອບຄົວ 78 ຫຼັງຄາເຮືອນ ມີ 338 ຄົນ, ເສຍຫາຍ 100% ມີ41ຄອບຄົວ52ຫຼັງຄາເຮືອນ, ເສຍຫາຍ 50% ມີ 26 ຄອບຄົວ 26 ຫຼັງຄາເຮືອນ, ລົດໃຫຍ່ເສຍຫາຍ 15 ຄັນ, ລົດຈັກ 42 ຄັນ, ເລົ້າເຂົ້າ, ຮ້ານຂາຍເຄື່ອງຕ່າງໆ ແລະ ອື່ນໆອີກ ລວມມູນຄ່າຄວາມເສຍຫາຍເບື້ອງຕົ້ນ 40 ຕື້ກວ່າກີບ (ສະເພາະຄວາມເສຍຫາຍທີ່ຢູ່ອາໄສຂອງປະຊາຊົນ); ນອກນີ້, ຍັງມີຂົວນ້ຳເນີນ 1 ແຫ່ງ, ຂົວອູ່ 1 ແຫ່ງ, ໝໍ້ແປງໄຟຟ້າ, ເສົາໄຟ, ສາຍໄຟ, ເສັ້ນທາງ ແລະ ອື່ນໆອີກ.

ທ່ານ ບຸນເຮືອງ ສຸລິໄຊ ກຳມະການພັກແຂວງ, ຫົວໜ້າພະແນກແຮງງານແລະສະຫວັດດີການສັງຄົມ, ຮອງປະທານຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ ໄດ້ກ່າວວ່າ: ບ້ານພຽງຫີ່ງ ແມ່ນມີຜົນເສຍຫາຍຫຼາຍ ທັງຊັບສິນປະຊາຊົນ ແລະ ຂອງລັດ ເນື່ອງຈາກນ້ຳຖ້ວມໃນເວລາກາງຄືນ ເຮັດໃຫ້ການຮັບມືມີຄວາມຫຍຸ້ງຍາກ, ແຂວງກໍຮ້ອນໃຈເລັ່ງໃຫ້ການຊ່ວຍເຫຼືອແຕ່ເນື່ອງຈາກວ່າເສັ້ນທາງເຂົ້າຫາບ້ານຖືກຕັດຂາດຫຼາຍຈຸດ ຈຶ່ງໄດ້ປະສານນຳກອງທັບອາກາດເພື່ອຈັດສົ່ງເຄື່ອງບັນເທົາທຸກ, ສ່ວນການຊ່ວຍເຫຼືອສຸກເສີນເບື້ອງຕົ້ນຄື: ຢາປົວພະຍາດ, ເຂົ້າສານ, ເຄື່ອງປຸກສ້າງ, ເຄື່ອງໃຊ້ຄົວເຮືອນ, ເຄື່ອງນຸ່ງຫົ່ມ, ເຄື່ອງອຸປະໂພກ-ບໍລິໂພກ ລວມມູນຄ່າ 120 ລ້ານກວ່າກີບ; ນອກນີ້, ບໍລິສັດເຂື່ອນໄຟຟ້ານ້ຳເນີນ 1 ແລະ ບໍລິສັດ ຊີ47 (C47) ທີ່ຮັບເໝົາກໍ່ສ້າງເຂື່ອນທີ່ກຳລັງດຳເນີນການກໍ່ສ້າງເຂື່ອນໄຟຟ້າຢູ່ນ້ຳເນີນ ໄດ້ໃຫ້ການຊ່ວຍເຫຼືອເຂົ້າສານ, ການຟື້ນຟູ, ພາຫະນະຮັບໃຊ້ ແລະ ອື່ນໆ.

**(ນາງ ສຸກສະຫວັນ ອິນທະແສງ)**



# ເຜີຍແຜ່ຜົນສຳເລັດກອງປະຊຸມສະພາ ຢູ່ 51 ຈຸດ ໃນແຂວງໄຊຍະບູລີ




(ສພຂ) - ໄລຍະວັນທີ 31 ກໍລະກົດ - 11 ສິງຫາຜ່ານມາ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 7 ແຂວງໄຊຍະບູລີ ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ເຊິ່ງນຳໂດຍທ່ານ ເພັງນິລັນ ຄຳພັນເພັງ ຮອງເລຂາພັກແຂວງ, ປະທານຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 7, ປະທານສະພາປະຊາຊົນແຂວງ ພ້ອມດ້ວຍຄະນະຕິດຕາມ ໄດ້ເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສະພາປະຊາຊົນແຂວງ (ສພຂ) ໄຊຍະບູລີ ຊຸດທີ II ຢູ່ 11 ເມືອງອ້ອມຂ້າງແຂວງ (10 ສຳນັກງານອ້ອມເມືອງ, 1 ສຳນັກງານອ້ອມຂ້າງແຂວງ) ລວມທັງໝົດ 51 ຈຸດ ໂດຍມີບັນດາຄະນະປະຈຳ ແລະ ກຳມະການພັກແຂວງ, ຫົວໜ້າ-ຮອງຫົວໜ້າພະແນກການ-ອົງການ-ກົມກອງຂອງແຂວງ, ຄະນະປະຈຳ ແລະກຳມະການພັກເມືອງ, ຫົວໜ້າ-ຮອງຫົວໜ້າຫ້ອງການຂອງເມືອງ, ພະນັກງານ-ລັດຖະກອນ, ລັດວິສາຫະກິດ-ສູນບໍລິການປະຈຳເມືອງ, ອົງການປົກຄອງບ້ານ ຕະຫຼອດຮອດພໍ່ແມ່ປະຊາຊົນບັນດາເຜົ່າ ເຂົ້າຮ່ວມຮັບຟັງ 6 ພັນກວ່າຄົນ.

ການເຜີຍແຜ່ຄັ້ງນີ້, ບັນດາອົງການປົກຄອງເມືອງ ໄດ້ລາຍງານສະພາບລວມໂດຍຫຍໍ້ການນຳພາ-ຊີ້ນຳວຽກງານຮອບດ້ານໃນໄລຍະ6ເດືອນຜ່ານມາ. ຈາກນັ້ນ, ສສຊ ແລະ ສສຂ ໄດ້ຜັດປ່ຽນກັນເຜີຍແຜ່ຜົນສຳເລັດສອງກອງປະຊຸມດັ່ງກ່າວ ເຊິ່ງກອງປະຊຸມສະໄໝສາມັນເທື່ອທີ 9 ຂອງ ສພຊ ໄດ້ພິຈາລະນາບັນຫາສຳຄັນພື້ນຖານຂອງປະເທດຊາດ ດ້ວຍການຮັບຮອງອອກເປັນມະຕິ 15 ສະບັບ ໃນນັ້ນ, ມີການສ້າງ ແລະ ປັບປຸງກົດໝາຍ 10 ສະບັບ (ສ້າງໃໝ່ 5 ສະບັບ), ປິດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກແຕ່ກອງປະຊຸມສະໄໝສາມັນເທື່ອທີ 8 ຫາ ເທື່ອທີ 9 ແລະ ທິດທາງແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 10 ຂອງ ສພຊ ແລະ ວຽກງານອື່ນໆຂອງລັດຖະບານ. ກອງປະຊຸມສະໄໝສາມັນເທື່ອທີ 9 ຂອງ ສພຂ ໄດ້ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາບົດລາຍງານ ຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2025; ບົດລາຍງານຜົນການສະຫຼຸບຕີລາຄາການໂຄສະນາເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍທົ່ວແຂວງ; ການແຕ່ງຕັ້ງປະທານຄະນະກຳມະການປົກຄອງ11ເມືອງຂອງແຂວງ ແລະ ບົດລາຍງານການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ3 ສະບັບຄື: ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ, ນຳໃຊ້ ແລະ ອະນຸລັກຊ້າງບ້ານ, ຂໍ້ຕົກລົງວ່າດ້ວຍກອງທຶນຄວບຄຸມ, ສະກັດກັ້ນ ແລະ ຄ້າຢາເສບຕິດ ແລະຂໍ້ຕົກລົງວ່າດ້ວຍການຄຸ້ມຄອງພັດທະນາ ແລະ ບໍລິຫານຕົວເມືອງໄຊຍະບູລີ. ນອກນີ້, ຍັງໄດ້ເຜີຍແຜ່ຜົນສຳເລັດ ກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງ ສພຂ ໄຊຍະບູລີ ຊຸດທີ II ຕື່ມອີກ.

ທັງນີ້, ກໍເພື່ອຜັນຂະຫຍາຍ ແລະ ໂຄສະນາເຜີຍແຜ່ບັນດາມະຕິທີ່ໄດ້ຮັບຮອງໃນກອງປະຊຸມແນໃສ່ເຮັດໃຫ້ພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນພາຍໃນແຂວງໄດ້ຮັບຮູ້ ແລະ ເຂົ້າໃຈຢ່າງທົ່ວເຖິງ ທັງເປັນການພົບປະແລະຮັບຟັງຄຳສະເໜີ ເຊິ່ງໄດ້ຮັບທັງໝົດ 85 ຄຳສະເໜີໃນນັ້ນ, ໄດ້ອະທິບາຍຊີ້ແຈງກັບທີ່28ຄຳສະເໜີ, ອີກ 49 ຄຳສະເໜີທີ່ຕິດພັນກັບຂັ້ນເມືອງແມ່ນມອບໃຫ້ບັນດາເມືອງສືບຕໍ່ຄົ້ນຄວ້າ ແລະ 8 ຄຳສະເໜີ, ຄະນະ ສສຊ ຈະນຳໄປສະເໜີຕໍ່ຄະນະນຳຂັ້ນເທິງ ກໍຄືພາກສ່ວນທີ່ກ່ຽວຂ້ອງ ຮັບຮູ້ ແລະ ພິຈາລະນາແກ້ໄຂ ຕາມຄວາມເໝາະສົມ.

ໂອກາດນີ້, ທາງຄະນະ ສສຊຍັງໄດ້ນຳເອົາວັດຖຸປັດໄຈ ເຊັ່ນ:ເຄື່ອງໃຊ້ຄົວເຮືອນ, ຄອມພິວເຕີ 1 ຊຸດ ແລະ ເງິນສົດຈຳນວນໜຶ່ງ ລວມມູນຄ່າທັງໝົດ 51 ລ້ານກີບ ມອບໃຫ້ແກ່ອຳນາດການປົກຄອງເມືອງ ເພື່ອນຳໄປຊ່ວຍເຫຼືອ ບັນເທົາທຸກໃຫ້ພໍ່ແມ່ປະຊາຊົນຜູ້ທີ່ປະສົບໄພນ້ຳຖ້ວມ.

**(ອິນທີ ຂຽວສີຟ້າ)**



# ສພຂ ວຽງຈັນ ຮັບຮອງເອົາບັນຫາສຳຄັນພື້ນຖານຂອງແຂວງ




(ສພຂ) - ກອງປະຊຸມສະໄໝສາມັນເທື່ອທີ9ຂອງສະພາປະຊາຊົນແຂວງ (ສພຂ) ວຽງຈັນ ຊຸດທີ II ໄດ້ດຳເນີນໃນວັນທີ 30-31 ກໍລະກົດຜ່ານມາ ໂດຍການເປັນປະທານຂອງທ່ານ ບຸນສອນ ເພັດລາວັນ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ, ເຂົ້າຮ່ວມມີທ່ານຄຳພັນ ສິດທິດຳພາ ກຳມະການສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງວຽງຈັນ, ມີບັນດາທ່ານການນຳພັກ-ລັດຂັ້ນແຂວງ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 10 ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ), ເຈົ້າເມືອງ 11 ເມືອງ, ຫົວໜ້າພະແນກການ-ອົງການ-ກົມກອງ, ນັກທຸລະກິດ ແລະ ຕາງໜ້າພາກສ່ວນທີ່ກ່ຽວຂ້ອງອ້ອມຂ້າງແຂວງ.

ກອງປະຊຸມໄດ້ຮັບຟັງການລາຍງານຂອງອົງການປົກຄອງແຂວງ ໃນການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານຂອງແຂວງ; ການລາຍງານຂອງສານປະຊາຊົນ, ອົງການໄອຍະການປະຊາຊົນ ແລະ ສະພາປະຊາຊົນແຂວງ; ການລາຍງານບັນຫາທີ່ພົ້ນເດັ່ນຂອງພະແນກການກ່ຽວຂ້ອງຈຳນວນໜຶ່ງ. ສສຊ ແລະ ສສຂ ໄດ້ພ້ອມກັນຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນພື້ນຖານຂອງແຂວງ: 1) ບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ ແລະ ທິດທາງແຜນການ6ເດືອນທ້າຍປີ 2025; 2) ການເຄື່ອນໄຫວວຽກງານ 6 ເດືອນຕົ້ນປີ ແລະ ທິດທາງແຜນການ6ເດືອນທ້າຍປີ 2025 ຂອງສະພາປະຊາຊົນແຂວງ; 3) ບຸກຄະລາກອນຂອງອົງການປົກຄອງແຂວງຕາມການສະເໜີຂອງທ່ານເຈົ້າແຂວງ ຄື: ປະທານຄະນະກຳມະການປົກຄອງເມືອງ 11 ເມືອງ ແລະ ຫົວໜ້າພະແນກການ 2 ພະແນກ ຄື: ສຶກສາທິການ ແລະ ກິລາ, ສາທາລະນະສຸກ.

ໃນການຖະແຫຼງຂ່າວຜົນສຳເລັດເມື່ອວັນທີ4 ສິງຫາ, ທ່ານ ຄຳຫຼ້າ ສີສຸວົງ ເລຂາທິການສະພາປະຊາຊົນແຂວງ ໃຫ້ຮູ້ວ່າ: ໃນໄລຍະດຳເນີນກອງປະຊຸມຄັ້ງນີ້ ມີປະຊາຊົນສົ່ງຄຳຄິດຄຳເຫັນຜ່ານໂທລະສັບສາຍດ່ວນ 023 156 ຈຳ ນວນ 6 ຄຳສະເໜີ ໂດຍເນື້ອໃນແມ່ນພົວພັນເຖິງຜົນກະທົບຈາກການພັດທະນາເສດຖະກິດ-ສັງຄົມ, ການດຳເນີນທຸລະກິດ ແລະ ບັນຫາເສັ້ນທາງ ເຊິ່ງກອງເລຂາກອງປະຊຸມ ໄດ້ສັງລວມ ແລະ ຈະມອບໃຫ້ພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າແກ້ໄຂໃຫ້ຖືກຕ້ອງສອດຄ່ອງຕາມກົດໝາຍ ແລະ ລະບຽບການ.

**(ບູລາຕີ ແສນທະວົງ)**



# VNL ມອບເຄື່ອງຮັບໃຊ້ຫ້ອງການໃຫ້ແກ່ ສພຂ ບໍລິຄຳໄຊ




(ສພຂ) - ວັນທີ 30 ກໍລະກົດຜ່ານມາ, ບໍລິສັດ VNL ຈຳກັດຜູ້ດຽວ ໄດ້ມອບຈັກກອບປີແລະເສື້ອກັນລົມ ລວມມູນຄ່າ 41,226,000 ກີບ ໃຫ້ແກ່ສະພາປະຊາຊົນແຂວງ (ສພຂ) ບໍລິຄຳໄຊ, ຕາງໜ້າມອບໂດຍທ່ານຈ່ຽນວັນ ນະເລີດ ປະທານບໍລິສັດດັ່ງກ່າວແລະຕາງໜ້າຮັບໂດຍທ່ານ ປອ. ສຸວັນນີ ໄຊຊະນະ ປະທານສະພາປະຊາຊົນແຂວງ ເຊິ່ງມີພາກສ່ວນກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພະຍານ; ທ່ານ ປອ ສຸວັນນີ ໄຊຊະນະ ໄດ້ສະແດງຄວາມຂອບໃຈແລະມອບໃບຍ້ອງຍໍຂອງປະທານສະພາປະຊາຊົນແຂວງ ໃຫ້ບໍລິສັດ VNL ຈຳກັດຜູ້ດຽວ ທີ່ມີຜົນງານດີເດັ່ນໃນການປະກອບສ່ວນອຸປະຖຳໃນຄັ້ງນີ້.

**(ລະອອງດາວ)**

# ເຜີຍແຜ່ວຽກງານສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ຄວາມສະເໝີພາບຍິງ-ຊາຍ ແລະ ວຽກສິດທິເດັກ



(ສພຂ) - ວັນທີ 15 ສິງຫາຜ່ານມາ ທີ່ຫ້ອງປະຊຸມສະພາປະຊາຊົນແຂວງບໍລິຄຳໄຊ, ໄດ້ມີກອງປະຊຸມເຜີຍ ແຜ່ວຽກງານສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ຄວາມສະເໝີພາບຍິງ-ຊາຍ ແລະວຽກສິດທິເດັກ ໂດຍການເປັນປະທານຮ່ວມຂອງທ່ານ ປອ. ນາງ ຈັນໂສດາ ພອນທິບ ຮອງປະທານຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ, ຮອງປະທານຄະນະກຳມາທິການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ແລະເດັກ(ຄກມດ), ຮອງປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ເພດຍິງ ທັງເປັນ ສສຊ ປະຈຳເຂດເລືອກຕັ້ງທີ 15 ແຂວງຈຳປາສັກ ແລະ ທ່ານ ໃສຄຳ ທອງລັດ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງ, ເຂົ້າຮ່ວມມີບັນດາທ່ານ ສສຊ ປະຈຳເຂດເລືອກຕັ້ງທີ 11, ສະມາຊິກສະພາປະຊາຊົນແຂວງແລະຄກມດແຂວງບໍລິຄຳໄຊ ພ້ອມດ້ວຍຄະນະ ສສຊ ເພດຍິງ 5 ແຂວງພາກກາງແລະພາກສ່ວນທີ່ກ່ຽວຂ້ອງ; ຈຸດປະສົງແມ່ນເພື່ອສ້າງຄວາມຮັບຮູ້ກ່ຽວກັບແນວທາງນະໂຍບາຍຂອງພັກ-ລັດ, ກົນໄກໃນການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ແລະ ເດັກ, ການສົ່ງເສີມຄວາມສະເໝີພາບຍິງ-ຊາຍ ແລະ ລຶບລ້າງການຈຳແນກຕໍ່ແມ່ຍິງ, ການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ, ການປ້ອງກັນ ແລະ ແກ້ໄຂຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ.

ກອງປະຊຸມໄດ້ເຜີຍແຜ່ກົນໄກໃນການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ການສົ່ງເສີມຄວາມສະເໝີພາບຍິງ-ຊາຍ, ການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ເຊິ່ງຍົກໃຫ້ເຫັນພາລະບົດບາດຂອງຄະນະກຳມາທິການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ໃນການເປັນເສນາທິການຊ່ວຍວຽກລັດຖະບານ ຄົ້ນຄວ້ານະໂຍບາຍ, ຍຸດທະສາດ, ນິຕິກຳ, ແຜນດຳເນີນງານແຫ່ງຊາດ ແລະໂຄງການກ່ຽວກັບວຽກງານການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ຄວາມສະເໝີພາບຍິງ-ຊາຍ, ການລຶບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ ແລະ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກລວມທັງການສົ່ງເສີມ, ການພັດທະນາ, ການປົກປ້ອງ, ການມີສ່ວນຮ່ວມຂອງເດັກ ແລະ ການປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ ແລະ ເດັກ ໃນຂອບເຂດທົ່ວປະເທດ ໂດຍສະເພາະການຈັດຕັ້ງປະຕິບັດສົນທິສັນຍາວ່າດ້ວຍວຽກສິດທິເດັກ ແລະ ສົນທິສັນຍາວ່າດ້ວຍການລຶບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ ທີ່ ສປປລາວ ເປັນພາຄີ; ຈາກນັ້ນ, ກໍໄດ້ສົນທະນາແລກປ່ຽນຄຳຄິດເຫັນຢ່າງກົງໄປກົງມາ ເພື່ອຊຸກຍູ້ສົ່ງເສີມໃຫ້ອົງການປົກຄອງແຕ່ລະຂັ້ນ ສຸມໃສ່ການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃຫ້ກວ້າງຂວາງ ໂດຍສຸມໃສ່ການໂຄສະນາເຜີຍແຜ່ໃຫ້ປະຊາຊົນລາວບັນດາເຜົ່າ ໄດ້ຮັບຮູ້, ເຂົ້າໃຈຢ່າງທົ່ວເຖິງເລິກເຊິ່ງ ເຮັດໃຫ້ກົດໝາຍວ່າດ້ວຍຄວາມສະເໝີພາບຍິງ-ຊາຍ ໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນຮູບປະທຳຫຼາຍຂຶ້ນ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນທາງດ້ານງົບປະມານຈາກໂຄງການມູນນິທິ ເວດມິນສເຕີ ເພື່ອປະຊາທິປະໄຕ (WFD).

**(ນາງ ໂສລະຢ່າ ໄຊຍະວົງ)**

# ສາລະວັນ ປັບປຸງເນື້ອໃນນິຕິກຳ 3 ສະບັບ



(ສພຂ) - ວັນທີ 30 ກໍລະກົດຜ່ານມາ ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ສາລະວັນ ໄດ້ມີກອງປະຊຸມປັບປຸງເນື້ອໃນຮ່າງນິຕິກຳໃຕ້ກົດໝາຍ 3 ສະບັບ ທີ່ໄດ້ພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 9 ຂອງ ສພຂ ຊຸດທີ II ໂດຍການເປັນປະທານຂອງທ່ານ ຂັນໄຊ ຣັດຖະເຣົາ ຮອງປະທານສະພາປະຊາຊົນແຂວງ, ມີບັນ ດາຮອງປະທານຄະນະກຳມະການ, ຄະນະເລຂາທິການ, ຫົວໜ້າ ແລະ ຮອງຫົວໜ້າຂະແໜງຂອງສພຂພ້ອມດ້ວຍພະແນກການທີ່ກ່ຽວຂ້ອງໃນການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍຂັ້ນແຂວງ ເຂົ້າຮ່ວມທັງໝົດ 19 ທ່ານ ຍິງ 6 ທ່ານ; ທັງນີ້, ກໍເພື່ອກວດກາຄືນການປັບປຸງເນື້ອໃນຮ່າງນິຕິກຳໃຕ້ກົດໝາຍ 3 ສະບັບ ຄື: ຮ່າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງຕະຫຼາດຂະໜາດນ້ອຍຢູ່ແຂວງ, ຮ່າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງອູ່ສ້ອມແປງພາຫະນະຢູ່ແຂວງ ແລະ ຮ່າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງເຄື່ອງປ່າຂອງດົງຢູ່ແຂວງ.

ຜູ້ເຂົ້າຮ່ວມໄດ້ພ້ອມກັນສຸມໃສ່ຄົ້ນຄວ້າຢ່າງລະອຽດ ແລະ ເລິກເຊິ່ງ ຕໍ່ຮ່າງນິຕິກຳ 3 ສະບັບດັ່ງກ່າວ ເພື່ອເລືອກເຟັ້ນເອົາຄຳເຫັນຂອງຜູ້ແທນມາປັບປຸງໃສ່ເນື້ອໃນຂໍ້ຕົກລົງທີ່ເຫັນວ່າຍັງບໍ່ທັນສອດຄ່ອງ ແລະ ແທດເໝາະກັບສະພາບຄວາມເປັນຈິງຂອງທ້ອງຖິ່ນເພື່ອເຮັດໃຫ້ນິຕິກຳມີເນື້ອໃນຄົບຖ້ວນ ແລະ ສົມບູນ, ພາຍຫຼັງທີ່ມີການປັບປຸງແລ້ວ ຈະສົ່ງຮ່າງນິຕິກຳໄປຍັງຄະນະປະຈຳສະພາປະຊາຊົນແຂວງເພື່ອກວດກາຄືນແລະສະເໜີໄປຍັງເຈົ້າແຂວງ ພິຈາລະນາລົງລາຍເຊັນພາຍໃນກຳນົດເວລາທີ່ກຳນົດໄວ້.

**(ນາງ ຈັນທີ ດວງປັນຍາ)**

# ສພຂ ສະຫວັນນະເຂດ ຮັບຮອງ 3 ນິຕິກຳສ້າງໃໝ່



(ສພຂ) - ກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາປະຊາຊົນແຂວງ(ສພຂ) ສະຫວັນນະເຂດ ຊຸດທີ II ໄດ້ດຳເນີນໃນວັນທີ 28-30 ກໍລະກົດຜ່ານມາ ໂດຍການເປັນປະທານຂອງທ່ານ ກົງແກ້ວ ມີວໍລະຈັກ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ, ມີທ່ານ ບຸນໂຈມ ອຸບົນປະເສີດ ເລຂາພັກແຂວງ, ເຈົ້າແຂວງສະຫວັນນະເຂດ, ບັນດາທ່ານການນຳພັກ-ລັດຂັ້ນແຂວງ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 13 ແລະ ສະມາຊິກສະພາປະຊາຊົນແຂວງ ພ້ອມດ້ວຍບັນດາຫົວໜ້າພະແນກການ-ອົງການລັດທຽບເທົ່າ, ອົງການກວດສອບປະຈຳພາກກາງ2, ເລຂາພັກພັກເມືອງ-ນະຄອນ, ອະດີດສສຊ ປະຈຳເຂດເລືອກຕັ້ງ, ຫົວໜ່ວຍທຸລະກິດ, ສະຖາບັນການສຶກສາ ແລະ ຂະແໜງການກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ພິຈາລະນາຮັບຮອງເອົາບັນດາເນື້ອໃນສຳຄັນຕ່າງໆຂອງແຂວງຄື: ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດປະຈຳ6ເດືອນຕົ້ນປີຕິດພັນກັບທິດທາງແຜນການ 6 ເດືອນທ້າຍປີ2025; ນິຕິກຳໃຕ້ກົດໝາຍສ້າງໃໝ່ 3 ສະບັບ ຄື: ຂໍ້ຕົກລົງວ່າດ້ວຍການສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດໃນສະຖານທີ່ສຶກສາທົ່ວແຂວງ, ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງແຜນຜັງນະຄອນໄກສອນພົມວິຫານ ແລະ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງແຜນຜັງເມືອງອຸທຸມພອນ; ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານແຕ່ກອງປະຊຸມສະໄໝສາມັນເທື່ອທີ 8 ຫາເທື່ອທີ 9 ແລະ ທິດທາງແຜນການຮອດກອງປະຊຸມທ້າຍສະໄໝຂອງ ສພຂ.

ໃນໄລຍະດຳເນີນກອງປະຊຸມ, ໄດ້ຮັບຄຳສະເໜີຈາກພໍ່ແມ່ປະຊາຊົນຜູ້ມີສິດເລືອກຕັ້ງ ຜ່ານໂທລະສັບສາຍດ່ວນມາຍັງກອງປະຊຸມ ຈຳນວນ 22 ສາຍ, 06 ເລື່ອງ.

# ສສຊ-ສສຂ ພົບປະຜູ້ມີສິດເລືອກຕັ້ງຢູ່ເມືອງຈຳພອນ



(ສພຂ) - ວັນທີ 31 ກໍລະກົດ-1 ສິງຫາຜ່ານມາ, ທ່ານ ນາງ ພູທອນ ແກ້ວພູວົງ ຮອງປະທານສະພາປະຊາຊົນແຂວງ (ສພຂ) ສະຫວັນນະເຂດ ທັງເປັນສະມາຊິກສະພາປະຊາຊົນແຂວງ(ສສຂ)ປະຈຳເຂດເລືອກຕັ້ງເມືອງຈຳພອນ ພ້ອມດ້ວຍທ່ານ ນາງ ປອ. ບົວໄຂ ເພັງພະຈັນ ແລະ ທ່ານ ພັທ. ແສງກາສຸວັນນະຄົງ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 13 ໄດ້ພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສພຂ ຊຸດທີII ທີ່ເມືອງຈຳພອນ ໂດຍການຕ້ອນຮັບຂອງທ່ານ ບຸນຊູ ທຸ່ນຊົມພູ ເລຂາພັກເມືອງ, ມີບັນດາຫົວໜ້າ-ຮອງຫົວໜ້າຫ້ອງການ, ພະນັກງານ-ລັດຖະກອນ ແລະ ແຂກຖືກເຊີນ ເຂົ້າຮ່ວມ.

ທ່ານ ບຸນຊູ ທຸ່ນຊົມພູ ໄດ້ລາຍງານສະພາບການພັດທະນາເສດຖະກິດ-ສັງຄົມຂອງເມືອງ ເຊິ່ງໃຫ້ຮູ້ວ່າ: ເມືອງຈຳພອນ ມີ 101 ບ້ານ, 20,351 ຫຼັງຄາເຮືອນ, 21,542 ຄົວເຮືອນ, ພົນລະເມືອງ 121,070 ຄົນ ເປັນຍິງ 61,956 ຄົນ, ພື້ນຖານເສດຖະກິດມີຂະຫຍາຍຕົວສະເລ່ຍ 5.88% ລວມຍອດຜະລິດຕະພັນພາຍໃນບັນລຸ 2,853 ກວ່າຕື້ກີບ ສະເລ່ຍໃສ່ຫົວຄົນໄດ້ 23 ລ້ານກີບ/ຄົນ/ປີ; ພ້ອມກັນນັ້ນ, ສສຊ ແລະ ສສຂ ໄດ້ຜັດປ່ຽນກັນເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອ 9 ຂອງທັງສອງສະພາ ເຊິ່ງໄດ້ພິຈາລະນາ ແລະ ຮັບຮອງເອົາບັນດາບັນຫາສຳຄັນພື້ນຖານຂອງປະເທດຊາດ ແລະ ຂອງແຂວງສະຫວັນນະເຂດ. ຈາກນັ້ນ, ສສຊ-ສສຂ ແລະ ການນຳຂອງເມືອງ ຍັງໄດ້ລົງພົບປະອຳນາດການປົກຄອງບ້ານ ແລະ ປະຊາຊົນບ້ານນາກະທ້າງ, ບ້ານເຫຼົ່າໜາດ ແລະບ້ານດົງມອນ ພ້ອມທັງຮັບຟັງຄວາມຂັດຂ້ອງໝອງໃຈຂອງພໍ່ແມ່ປະຊາຊົນ ເຊິ່ງໄດ້ສະເໜີຫຼາຍບັນ ຫາ ເປັນຕົ້ນແມ່ນລາຄາສິນຄ້າແພງ, ການສຶກສາທີ່ບໍ່ໄດ້ມາດຕະຖານ, ການຄົມມະນາຄົມທີ່ມີຄວາມລຳບາກລະຫວ່າງບ້ານກໍຄືເມືອງ ແລະ ບັນຫາການຜະລິດກະສິກຳອື່ນໆ ທີ່ຕິດພັນກັບຊີວິດການເປັນຢູ່; ນອກນັ້ນ, ສສຊ ແລະ ສສຂ ຍັງໄດ້ມອບເຄື່ອງຊ່ວຍເຫຼືອ ເປັນເຄື່ອງນຸ່ງຫົ່ມ ໃຫ້ປະຊາຊົນບ້ານນາກະທ້າງ ມູນຄ່າ 12 ລ້ານກີບ ແລະ ມອບນ້ຳດື່ມໃຫ້ບ້ານເຫຼົ່າໜາດ ແລະ ບ້ານດົງມອນ ມູນຄ່າ 8 ລ້ານກີບ.

# ກອງປະຊຸມ ຄປຈສພຂ ຈຳປາສັກ ປະຈຳເດືອນກໍລະກົດ



(ສພຂ) - ກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ (ຄປຈສພຂ) ຈຳປາສັກ ປະຈຳເດືອນກໍລະກົດ 2025 ໄດ້ດຳເນີນເມື່ອວັນທີ 28 ກໍລະກົດຜ່ານມາ ໂດຍການເປັນປະທານຂອງທ່ານ ສາຍທອງ ໄຊຍະວົງ ຮອງເລຂາພັກແຂວງ, ປະທານຄະນະປະຈຳສະພາປະຊາຊົນແຂວງ, ເຂົ້າຮ່ວມມີບັນດາທ່ານຮອງປະທານ ແລະ ກຳມະການໃນ ຄປຈ ສພຂ, ຮອງປະທານຄະນະກຳມະການ, ຄະນະເລຂາທິການ ແລະ ພະນັກງານທີ່ກ່ຽວຂ້ອງ.

ກອງປະຊຸມໄດ້ຮັບຟັງການຜ່ານບົດສະຫຼຸບການເຄື່ອນໄຫວວຽກງານຂອງຄະນະປະຈຳສະພາປະຊາຊົນແຂວງ ປະຈຳເດືອນກໍລະກົດ ແລະ ທິດທາງແຜນການປະຈຳເດືອນສິງຫາ 2025, ບົດສະຫຼຸບຕີລາຄາການກະກຽມ ແລະ ດຳເນີນກອງປະຊຸມສະໄໝວິສາມັນເທື່ອທີ 2 ແລະ ສະໄໝສາມັນເທື່ອທີ 9 ຂອງ ສພຂ; ຈາກນັ້ນ, ໄດ້ປະກອບຄຳເຫັນ, ຖອດຖອນບົດຮຽນເຊິ່ງກັນແລະກັນ ເພື່ອປັບປຸງແກ້ໄຂຂໍ້ຄົງຄ້າງ ໃຫ້ສາມາດຈັດຕັ້ງປະຕິບັດໄດ້ຢ່າງມີຜົນສຳເລັດ. ພ້ອມກັນນັ້ນ, ຍັງໄດ້ຄົ້ນຄວ້າພິຈາລະນາໜັງສືສະເໜີຂອງອົງການປົກຄອງແຂວງ ກ່ຽວກັບແຜນລາຍຈ່າຍງົບປະມານກອງທຶນບູລະນະຮັກສາ ແລະ ສ້ອມແປງທາງຫຼວງທ້ອງຖິ່ນ ທີ່ກະຊວງໂຍທາທິການ ແລະ ຂົນສົ່ງ ຈັດແບ່ງໃຫ້ແຂວງຈຳປາສັກ ປະຈຳປີ 2025 ແລະ ໜັງສືສະເໜີຂອງຄະນະສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງໂພນທອງ.

ທ່ານ ສາຍທອງ ໄຊຍະວົງ ໄດ້ສະຫຼຸບຄືນການປະກອບຄຳຄິດເຫັນ ແລະ ຊີ້ນຳໃຫ້ 3 ຄະນະກຳມະການແລະຄະນະເລຂາທິການ ນຳເອົາເນື້ອໃນຈິດໃຈຂອງກອງປະຊຸມຄັ້ງນີ້ ໄປຈັດຕັ້ງປະຕິບັດແລະເອົາໃຈໃສ່ປະສານສົມທົບກັບພາກສ່ວນກ່ຽວຂ້ອງໃນການກະກຽມຮ່າງເອກະສານ, ການສ້າງແຜນ, ການອອກແຈ້ງການເຖິງພາກສ່ວນກ່ຽວຂ້ອງ ເພື່ອໃຫ້ເນື້ອໃນວຽກງານທີ່ພິຈາລະນາ ສາມາດຈັດຕັ້ງປະຕິບັດສຳເລັດຕາມການຕົກລົງ ທັງຮັບປະກັນຄວາມຖືກຕ້ອງ, ສອດຄ່ອງກັບລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍແລະທ່ວງທັນກັບສະພາບການ.

**(ສົມວິຈິດ ໄຊມົນຕີ)**



# ຮອງປະທານ ສພຂ ຈຳປາສັກເຄື່ອນໄຫວ ຊຸກຍູ້ວຽກງານຢູ່ດ່ານປະເພນີຊ່ອງຕາອູ



(ສພຂ) - ວັນທີ 21 ກໍລະກົດຜ່ານມາ, ທ່ານ ແກ້ວລັດຕະນະ ສີຫາວົງ ຮອງປະທານສະພາປະຊາຊົນແຂວງ (ສພຂ), ຜູ້ຊີ້ນຳວຽກງານຮອບດ້ານຢູ່ເມືອງສຸຂຸມາ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຊຸກຍູ້ວຽກງານຢູ່ດ່ານປະເພນີຊ່ອງຕາອູ ເມືອງສຸຂຸມາ ແຂວງຈຳປາສັກ ໂດຍໄດ້ເຮັດວຽກຮ່ວມກັບຄະນະນຳຂອງເມືອງ ນຳໂດຍທ່ານ ປອ. ຄຳໄຕ ແກ້ວປະເສີດ ເລຂາພັກເມືອງ, ມີພະນັກງານຫັນລົງກໍ່ສ້າງຮາກຖານຂອງແຂວງປະຈຳເມືອງ, ຄະນະຄຸ້ມຄອງດ່ານປະເພນີຊ່ອງຕາອູ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ ເຊິ່ງໄດ້ຮັບຟັງການລາຍງານກ່ຽວກັບສະພາບຈຸດພິເສດ, ການຈັດຕັ້ງປະຕິບັດວຽກງານໂດຍສັງເຂບຈາກທ່ານ ປອ. ຄຳໄຕ ແກ້ວປະເສີດ ເຊິ່ງຍົກໃຫ້ເຫັນຜົນສຳເລັດ ແລະ ບາງບັນຫາພົ້ນເດັ່ນທີ່ເກີດຂຶ້ນຢູ່ເມືອງຕິດພັນກັບການພັດທະນາພື້ນຖານໂຄງລ່າງຂອງເມືອງ; ຈາກນັ້ນ, ກໍໄດ້ແລກປ່ຽນຄຳຄິດຄຳເຫັນຕໍ່ບັນດາໜ້າວຽກຕ່າງໆ ໂດຍສະເພາະວຽກງານຄຸ້ມຄອງດ່ານ, ວຽກງານໂຍທາທິການ ແລະ ຂົນສົ່ງ, ວຽກງານສຳປະທານເນື້ອທີ່ດິນລັດໃນຂອບເຂດເມືອງ.

ທ່ານ ແກ້ວລັດຕະນະ ສີຫາວົງ ໄດ້ມີຄຳເຫັນໂອ້ລົມຕໍ່ຄະນະນຳ ກໍຄືພາກສ່ວນກ່ຽວຂ້ອງຂອງເມືອງ ໃນການເພີ່ມທະວີການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງດ່ານໃຫ້ເປັນລະບົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍ ໂດຍເນັ້ນໜັກໃຫ້ປະດັບປະດາປູກດອກໄມ້ຢູ່ຈຸດທາງເຂົ້າ-ອອກດ່ານ ພ້ອມທັງຕິດຕັ້ງໄຟໂຊລາແຊນຕາມສາຍທາງຕະຫຼາດ ໃຫ້ມີຄວາມສະອາດສວຍງາມ, ຈັດສັນຄືນໃໝ່ການວາງເຄື່ອງຂອງຂາຍຕາມເສັ້ນທາງ ເພື່ອຫຼຸດຜ່ອນຄວາມແອອັດໃນການສັນຈອນໄປ-ມາຂອງຜູ້ມາທ່ຽວຊົມ, ເອົາໃຈໃສ່ວຽກງານປະສານສົມທົບຢ່າງກົມກຽວລະຫວ່າງ 2 ຝ່າຍ ກໍຄືປະສານພົວພັນກັບເຈົ້າໜ້າທີ່ຝ່າຍລາຊະອານາຈັກໄທ ດ້ວຍຮູບການຕ່າງໆຕາມຄວາມເໝາະສົມ ເພື່ອຮັດແໜ້ນຄວາມສາມັກຄີ ແລະ ຖືກຕ້ອງປອງດອງກັນ, ກຳນົດຈຸດຖິ້ມຂີ້ເຫຍື້ອ ເພື່ອຄວາມສະອາດສວຍງາມພາຍໃນດ່ານ, ຕິດຕາມກວດກາສະພາບການຕ່າງໆ ພາຍໃນຂອບເຂດຄວາມຮັບຜິດຊອບ ໃຫ້ມີຄວາມປອດໄພ ເພື່ອໃຫ້ພໍ່ແມ່ປະຊາຊົນມີຄວາມສະດວກສະບາຍໃນການຊື້-ຂາຍ, ແລກປ່ຽນສິນຄ້າເຊິ່ງກັນແລະກັນ.

**(ຖະແຫຼງຂ່າວເມືອງສຸຂຸມາ)**

# ສພຂ ອັດຕະປື ຮັບຮອງ ບຸກຄາລະກອນອົງການປົກຄອງແຂວງ




(ສພຂ) - ກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາປະຊາຊົນແຂວງອັດຕະປືຊຸດທີ II ໄດ້ດຳເນີນໃນວັນທີ 7-8 ສິງຫາຜ່ານມາ ພາຍໃຕ້ການເປັນປະທານຂອງທ່ານ ນາງ ມີນາພອນ ໄຊສົມພູ ປະທານສະພາປະຊາຊົນແຂວງ, ມີບັນດາທ່ານການນຳພັກ-ລັດຂັ້ນແຂວງ, ພະແນກການ-ອົງການຈັດຕັ້ງພັກ-ລັດ, ລັດວິສາຫະກິດ, ທະນາຄານ, ພາກສ່ວນທີ່ກ່ຽວຂ້ອງ ແລະ ແຂກຖືກເຊີນ ເຂົ້າຮ່ວມ 100 ກວ່າທ່ານເຊິ່ງກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນພື້ນຖານຂອງແຂວງຄື: ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຂອງແຂວງ ປະຈຳ 6 ເດືອນຕົ້ນປີ ແລະທິດທາງແຜນການ 6 ເດືອນທ້າຍປີ 2025 ຕິດພັນກັບການແກ້ໄຂບັນຫາເຄັ່ງຮ້ອນທາງດ້ານເສດຖະກິດ-ການເງິນ, ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການ ເຄື່ອນໄຫວວຽກງານຂອງສະພາປະຊາຊົນແຂວງ ແຕ່ກອງປະຊຸມສະໄໝສາມັນເທື່ອທີ 8 ຫາເທື່ອທີ 9 ແລະ ທິດທາງແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 10.

ກອງປະຊຸມຍັງໄດ້ຮັບຟັງລາຍງານການກະກຽມຮ່າງແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ 5 ປີ (2026-2030) ຄັ້ງທີ IX, ຜົນການປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດຢູ່ແຂວງ, ລາຍງານກ່ຽວກັບການສ້າງແລະປັບປຸງນິຕິກຳໃຕ້ກົດໝາຍໃນໄລຍະຜ່ານມາ ແລະ ການກະກຽມຮ່າງແຜນການສ້າງນິຕິກຳໃຕ້ກົດໝາຍ ໄລຍະ 5 ປີ (2026-2030), ການຊີ້ແຈງບາງບັນຫາຕາມການຊັກຖາມຂອງຄະນະປະຈຳສະພາປະຊາຊົນແຂວງ (ຄປຈສພຂ) ຈາກບັນດາພາກສ່ວນທີ່ກ່ຽວຂ້ອງ ເປັນຕົ້ນແມ່ນການແກ້ໄຂບັນຫາການລັກລອບແຮ່ທາດທີ່ບໍ່ຖືກຕ້ອງ, ການຄຸ້ມຄອງຮ້ານອາຫານ, ຮ້ານບັນເທີງ ແລະ ແຫຼ່ງທ່ອງທ່ຽວ, ການຊຸກຍູ້ສົ່ງເສີມການຜະລິດເປັນສິນຄ້າເພື່ອຄໍ້າປະກັນສະບຽງອາຫານ ແລະ ສົ່ງອອກເປັນສິນຄ້າເພື່ອຫຼຸດຜ່ອນການນຳເຂົ້າ; ພ້ອມກັນນັ້ນ, ກໍໄດ້ຮັບຟັງການລາຍງານຂອງ ຄປຈສພຂ ກ່ຽວກັບການຮັບຮອງເອົາບຸກຄາລະກອນຂອງອົງການປົກຄອງແຂວງ ຕາມການສະເໜີຂອງທ່ານເຈົ້າແຂວງ ເຊິ່ງມີດັ່ງນີ້:

1. ຍົກຍ້າຍທ່ານ ສຸພາສິດ ລໍວັນໄຊ ຫົວໜ້າອົງການໄອຍະການປະຊາຊົນແຂວງອັດຕະປື, ພະນັກງານໄອຍະການປະຊາຊົນ ຂັ້ນ I ໄປປະຈຳການຢູ່ແຂວງຈຳປາສັກ;

2. ແຕ່ງຕັ້ງທ່ານ ວິໄລວັນ ແກ້ວເຮືອງສີ ຮອງຫົວໜ້າອົງການໄອຍະການປະຊາຊົນພາກໃຕ້, ພະນັກງານໄອຍະການປະຊາຊົນ ຂັ້ນ I ເປັນຫົວໜ້າອົງການໄອຍະການປະຊາຊົນແຂວງອັດຕະປື;

3. ຍົກຍ້າຍ ແລະ ແຕ່ງຕັ້ງພະນັກງານນຳພາ-ຄຸ້ມຄອງຂອງສານປະຊາຊົນແຂວງ ແລະ ສານປະຊາຊົນເຂດ 1 ແຂວງອັດຕະປື: ຍົກຍ້າຍ ແລະ ແຕ່ງຕັ້ງທ່ານ ຄຳຫຼ້າ ແກ້ວວັນສອນ ໄປເປັນປະທານສານປະຊາຊົນແຂວງ, ທ່ານ ພູໄຫວ ພົມມະສານ ໄປເປັນຮອງປະທານສານປະຊາຊົນແຂວງແລະແຕ່ງຕັ້ງທ່ານຄຳຄິດ ກຸນນະແສງ ເປັນປະທານສານປະຊາຊົນເຂດ 1;

4. ຍົກຍ້າຍ ແລະ ແຕ່ງຕັ້ງພະນັກງານນຳພາ-ຄຸ້ມຄອງຂອງແຂວງ: ຍົກຍ້າຍແລະແຕ່ງຕັ້ງທ່ານ ສຸລິວົງ ອະໄພວົງ ເປັນຫົວໜ້າພະແນກການເງິນ, ທ່ານ ບຸນທະມາລີໝັ້ນອານົງເປັນຫົວໜ້າພະແນກຍຸຕິທຳ; ຍົກຍ້າຍທ່ານ ສຸວັນສີ ແກ້ວວິເສີດ ໄປປະຈຳການຢູ່ຄະນະກວດກາພັກແຂວງ, ແຕ່ງຕັ້ງທ່ານ ສຸດໃຈ ກົມມະເມືອງ ເປັນຫົວໜ້າພະແນກອຸດສາ ຫະກຳ ແລະ ການຄ້າ, ທ່ານ ກົງໃຈ ສີດາວົງ ເປັນຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມ, ທ່ານ ສີອຸດົມ ອາລົມຈິດ ເປັນຫົວໜ້າຄະນະຄຸ້ມຄອງດ່ານສາກົນພູເກືອ;

5. ແຕ່ງຕັ້ງປະທານຄະນະກຳມະການປົກຄອງເມືອງ 5 ເມືອງ: ທ່ານ ຄຳກ້ອນ ດວງສົມປານ ເປັນປະທານຄະນະກຳມະການປົກຄອງເມືອງພູວົງ, ທ່ານ ພອນໄຊ ໄກສອນເສນາເປັນປະທານຄະນະກຳມະການປົກຄອງເມືອງໄຊເສດຖາ, ທ່ານ ບົວຄຳ ຮຽງລະເຍ ເປັນປະທານຄະນະກຳມະການປົກຄອງເມືອງຊານ

ອ່ານຕໍ່ໜ້າ 12





## ສະຫະພັນແມ່ຍິງ...

(ຕໍ່ຈາກໜ້າ 1)

ຫານງານສູນກາງສະຫະພັນແມ່ຍິງລາວທີ່ຈັດຂຶ້ນເມື່ອວັນທີ12 ສິງຫາຜ່ານມາຢູ່ສູນອົບຮົມແມ່ຍິງລາວ ເຊິ່ງກອງປະຊຸມໄດ້ສືບຕໍ່ຜ່ານບົດສໍາຫຼວດບຸກຄົນພາຍໃນຄະນະບໍລິຫານງານ ສສຍລ ສະໄໝທີ VIII ແລະ ລາຍງານຜົນການດໍາເນີນຊີວິດການເມືອງຂອງຕົນຕໍ່ຄະນະປະທານ ສສຍລ; ໂດຍການເຂົ້າຮ່ວມຂອງສະຫາຍ ນາງ ສີ ໃສ ລືເດດມູນສອນ ກໍາມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ, ຫົວໜ້າຄະນະຈັດຕັ້ງສູນກາງພັກ, ຜູ້ຊີ້ນໍາການກະກຽມດໍາເນີນກອງປະຊຸມໃຫຍ່ຜູ້ແທນແມ່ຍິງລາວທົ່ວປະເທດ ຄັ້ງທີ IX.

ນາງ ອາລີ ວົງໜໍ່ບຸນທໍາ ກໍາມະການສູນກາງພັກ, ປະທານຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ ໄດ້ລາຍງານຫຍໍ້ຜົນຂອງການດໍາເນີນກອງປະຊຸມບັ້ນດໍາເນີນຊີວິດການເມືອງທ້າຍສະໄໝຂອງຄະນະບໍລິຫານງານ ສສຍລ ສະໄໝທີ VIII ເຊິ່ງໄດ້ຍົກໃຫ້ເຫັນຜົນສໍາເລັດຫຼາຍດ້ານ, ຈຸດອ່ອນ, ຂໍ້ຄົງຄ້າງ ແລະ ວິທີແກ້ໄຂໃນຕໍ່ໜ້າ.

ສະຫາຍ ນາງ ສີໃສ ລືເດດມູນສອນ ໄດ້ມີຄໍາເຫັນຕໍ່ທີ່ປະຊຸມ ເຊິ່ງໄດ້ຍ້ອງຍໍຊົມເຊີຍຕໍ່ຜົນສໍາເລັດທີ່ສາມາດຍາດມາໄດ້ ແລະ ໄດ້ເນັ້ນໜັກໃຫ້ຄະນະບໍລິຫານງານ ສສຍລ ທຸກສະຫາຍຕ້ອງເອົາໃຈໃສ່ສືບຕໍ່ເພີ່ມທະວີວຽກງານນໍາພາການເມືອງ-ແນວຄິດຢ່າງຕໍ່ເນື່ອງ ໃຫ້ເຂົ້າສູ່ລວງເລິກແລະແທດກັບຕົວຈິງ; ເປັນແບບຢ່າງນໍາພາ-ຊີ້ນໍາຖັນແຖວແມ່ຍິງໃຫ້ມີຄວາມອຸ່ນອຽນທຸ່ນທ່ຽງ ແລະ ມີຄວາມໜັກແໜ້ນທາງດ້ານການເມືອງ, ມີຄຸນສົມບັດສົມທໍາປະຕິບັດ, ມີນໍ້າໃຈຮັກຊາດ, ຮັກລະບອບປະຊາທິປະໄຕປະຊາຊົນ, ຮັກສາກຽດສັກສີແມ່ຍິງລາວ ແລະ ສືບຕໍ່ສ້າງແມ່ຍິງລາວບັນດາເຜົ່າ ໃຫ້ກາຍເປັນຜູ້ສືບທອດທີ່ຈົງຮັກພັກດີຕໍ່ປະເທດຊາດ, ມີລະບຽບວິໄນ, ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ວຽກງານ ແລະ ຄອບຄົວ; ເພີ່ມທະວີເຕົ້າໂຮມຄວາມສາມັກຄີ ພ້ອມກັນຜ່ານຜ່າທຸກຂໍ້ຫຍຸ້ງຍາກ, ກະກຽມຄວາມພ້ອມຮອບດ້ານກ້າວເຂົ້າສູ່ການດໍາເນີນກອງປະຊຸມໃຫຍ່ຜູ້ແທນແມ່ຍິງລາວທົ່ວປະເທດ ຄັ້ງທີ IX ທັງກະກຽມຫັນເອົາເນື້ອໃນຈິດໃຈ, ທິດທາງຂອງກອງປະຊຸມເຂົ້າໃນແຜນພັດທະນາແມ່ຍິງຢູ່ແຕ່ລະຂະແໜງການ, ແຕ່ລະຂັ້ນ; ສືບຕໍ່ສ້າງ ແລະ ເຝິກຝົນຕົນເອງ ໃຫ້ມີຄວາມສະດຸ້ງໄວຕໍ່ສະພາບການທີ່ຜັນແປໄປຢ່າງໄວວາ ເພື່ອກຽມພ້ອມຮັບມືກັບສິ່ງທ້າທາຍທົດສອບທີ່ເກີດຂຶ້ນ, ກ້າຄິດ, ກ້າເຮັດ ແລະ ກ້າຮັບຜິດຊອບ ເພື່ອພັດທະນາຕົນເອງໃນສະພາບແວດລ້ອມໜ້າທີ່ການເມືອງຂອງພັກໃນໄລຍະໃໝ່; ສືບຕໍ່ຕັ້ງໜ້າປັບປຸງກົງຈັກການຈັດຕັ້ງແລະບຸກຄະລາກອນຂອງສະຫະພັນແມ່ຍິງແຕ່ລະຂັ້ນ ໃຫ້ມີຄວາມຮູ້, ຄວາມສາມາດ ສົມທົບກັບອີງການມະຫາຊົນ ເພື່ອປັບປຸງຄວາມເຂັ້ມແຂງຂອງທຸກການຈັດຕັ້ງ, ເອກະພາບກັນແກ້ໄຂບັນຫາປາກົດການຫຍໍ້ທໍ້ຢູ່ແຕ່ລະຂັ້ນ; ຍູ້ແຮງການສ້າງຂະບວນການໃຫ້ຟົດຟື້ນ, ຕໍ່ເນື່ອງ ເພື່ອຕ້ອນຮັບກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກ ເວົ້າລວມ, ເວົ້າສະເພາະແມ່ນກອງປະຊຸມໃຫຍ່ຜູ້ແທນແມ່ຍິງລາວທົ່ວປະເທດ; ເອົາໃຈໃສ່ຕື່ມຕໍ່ການຜັນຂະຫຍາຍມະຕິ 108/ກມສພ ວ່າດ້ວຍວຽກງານແນວໂຮມແລະວຽກງານອົງການມະຫາຊົນຂອງພັກໃນໄລຍະໃໝ່ ໃຫ້ສອດຄ່ອງກັບການຈັດຕັ້ງປະຕິບັດຕົວຈິງຫຼາຍກວ່າເກົ່າ ໂດຍສະເພາະແມ່ນການເຂົ້າຮ່ວມຂະບວນການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ, ການສ້າງອາຊີບທີ່ໝັ້ນຄົງ ສາມາດສ້າງລາຍຮັບໃຫ້ກັບຕົນເອງແລະຄອບຄົວ, ການສ້າງຄວາມສະເໝີພາບຍິງ-ຊາຍ, ການປົດປ່ອຍແມ່ຍິງອອກຈາກຄວາມຫຼ້າຫຼັງ ແລະ ເຂົ້າເຖິງການບໍລິການດ້ານການສຶກສາ, ສາທາລະນະສຸກ ໃຫ້ທົ່ວເຖິງ.

**(ຄັດຈາກເພຈ: ກະບອກສຽງແມ່ຍິງລາວ)**

## ຄະນະ...

(ຕໍ່ຈາກໜ້າ 1)

(ສພຊ) - ຄະນະຮັບຜິດຊອບສ້າງປຶ້ມ "50 ປີ ແຫ່ງສາຍພົວພັນລະຫວ່າງສະພາແຫ່ງຊາດລາວແລະສະພາແຫ່ງຊາດຫວຽດນາມ - ການຮ່ວມມືຮອບດ້ານ ແລະ ການພັດທະນາ" ຂອງສະພາແຫ່ງຊາດ ແຫ່ງ ສປປລາວ ນໍາໂດຍສະຫາຍ ສັນຍາ ປຣະເສີດ ກໍາມະການຄະນະປະຈໍາ, ປະທານກໍາມາທິການການຕ່າງປະເທດ ໄດ້ໄປເຄື່ອນໄຫວເຮັດວຽກ ແລະ ປຶກສາຫາລືເພື່ອເອກະພາບດ້ານເນື້ອໃນ ແລະ ເຕັກນິກຂອງປຶ້ມ50ປີ ໃນລະຫວ່າງວັນທີ 13-15 ສິງຫາ 2025 ຢູ່ ສສ.ຫວຽດນາມ.

ວັນທີ 14 ສິງຫາ, ສະຫາຍ ສັນຍາ ປຣະເສີດ ພ້ອມດ້ວຍຄະນະ ໄດ້ເຂົ້າຢ້ຽມຂໍ່ານັບສະຫາຍ ຫງວຽນ ຄັກ ດິ້ງ ກໍາມະການສູນກາງພັກກອມມູນິດຫວຽດນາມ, ຮອງປະທານສະພາແຫ່ງຊາດ. ສອງຝ່າຍປຶກສາຫາລືກ່ຽວກັບເນື້ອໃນແລະດ້ານເຕັກນິກຂອງປຶ້ມ 50 ປີ ເພື່ອຄວາມເອກະພາບໃນຄັ້ງສຸດທ້າຍກ່ອນຈະນໍາພິມອອກເຜີຍແຜ່ສູ່ສັງຄົມຂອງສອງປະເທດ; ພ້ອມທັງໄດ້ແຈ້ງສະພາບການພົ້ນເດັ່ນຂອງແຕ່ລະປະເທດໃຫ້ກັນຊາບ, ຕີລາຄາຄືນການພົວພັນມິດຕະພາບທີ່ຍິ່ງໃຫຍ່, ຄວາມສາມັກຄີພິເສດແລະການຮ່ວມມືຮອບດ້ານ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ເວົ້າລວມ, ເວົ້າສະເພາະການພົວພັນຮ່ວມມືລະຫວ່າງສອງສະພາແຫ່ງຊາດລາວ-ຫວຽດນາມ ທີ່ນັບມື້ແຕກດອກອອກຜົນຍິ່ງໆຂຶ້ນ. ສະຫາຍປະທານກໍາມາທິການການຕ່າງປະເທດ ໄດ້ລາຍງານສະພາບລວມໂດຍຫຍໍ້ກ່ຽວກັບການຮ່ວມມືໃນການສ້າງປຶ້ມ 50 ປີ ກັບຄະນະຊ່ຽວຊານສະພາແຫ່ງຊາດຫວຽດນາມເຊິ່ງມີການພົວພັນປະສານງານກັນຢ່າງສະໜິດແໜ້ນໃນການຄົ້ນຄວ້າ, ຮຽບຮຽງ, ກວດແກ້ຂໍ້ມູນ, ປະກອບຄໍາຄິດຄໍາເຫັນໃສ່ເນື້ອໃນປຶ້ມດັ່ງກ່າວ ຄົບຖ້ວນສົມບູນໃສ່ແຕ່ລະພາກ ນັບແຕ່ສະບັບທີ I ຈົນຮອດສະບັບປັບປຸງເທື່ອທີ V ເຊິ່ງເປັນສະບັບຫຼ້າສຸດ ແລະ ເປັນສະບັບທີ່ມີຄວາມເອກະພາບກັນໃນລະດັບສູງເຊິ່ງຜົນງານດັ່ງກ່າວ ແມ່ນຍ້ອນຄວາມເອົາໃຈໃສ່ເປັນຫ່ວງເປັນໄຍ ແລະ ຊີ້ນໍາຢ່າງໃກ້ຊິດຕິດແທດ ຂອງການນໍາຂັ້ນສູງຂອງສະພາແຫ່ງຊາດລາວ ແລະ ຫວຽດນາມ. ພ້ອມດຽວກັນນີ້, ສະຫາຍ ຫງວຽນ ຄັກ ດິ້ງ ໄດ້ຕີລາຄາສູງຕໍ່ການສ້າງປຶ້ມປະຫວັດສາດດັ່ງກ່າວ ເຊິ່ງຈະເປັນເອກະສານທາງການທີ່ສໍາຄັນໃຫ້ແກ່ພະນັກງານ-ລັດຖະກອນ, ປັນຍາຊົນ, ຄົນຮຸ່ນໜຸ່ມ ແລະ ອື່ນໆ ໄດ້ສຶກສາຄົ້ນຄວ້າ, ສືບທອດ ແລະ ປົກປັກຮັກສາໄວ້ ທັງເປັນການປະກອບສ່ວນສືບຕໍ່ຮັດແໜ້ນ ແລະ ເພີ່ມພູນຄູນສ້າງສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດແລະການຮ່ວມມືຮອບດ້ານ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ຫວຽດນາມ-ລາວ ກໍຄືສອງອົງການນິຕິບັນຍັດ ໃຫ້ນັບມື້ເຂົ້າສູ່ລວງເລິກ ແລະ ແຕກດອກອອກຜົນຍິ່ງໆຂຶ້ນ.

ໃນວັນດຽວກັນ, ຄະນະຜູ້ແທນຂອງສະພາແຫ່ງຊາດລາວໄດ້ເຮັດວຽກກັບສະຫາຍ ຫວູ ຫ້າຍຮ່າ ກໍາມະການສູນກາງພັກກອມມູນິດຫວຽດນາມ, ຫົວໜ້າຄະນະຊີ້ນໍາປຶ້ມ 50 ປີ ຂອງສະພາແຫ່ງຊາດຫວຽດນາມ ພ້ອມດ້ວຍຄະນະ ດ້ວຍບັນຍາກາດໄມຕີຈິດມິດຕະພາບອັນອົບອຸ່ນ, ສະໜິດສະໜົມຖານສະຫາຍອ້າຍນ້ອງ. ສອງຝ່າຍໄດ້ແລກປ່ຽນຄໍາຄິດຄໍາເຫັນ ແລະ ປຶກສາຫາລືເພື່ອຄວາມເປັນເອກະພາບຂັ້ນສຸດທ້າຍທາງດ້ານເນື້ອໃນ ແລະ ດ້ານເຕັກນິກຂອງປຶ້ມ 50 ປີ ແຫ່ງສາຍພົວພັນລະຫວ່າງ ສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດຫວຽດນາມ - ການຮ່ວມມືຮອບດ້ານ ແລະການພັດທະນາ ເຊິ່ງໄດ້ມີຄວາມເປັນເອກະພາບກັນເກືອບທັງໝົດ ເປັນຕົ້ນແມ່ນດ້ານເນື້ອໃນ, ລາຍລະອຽດທາງດ້ານເຕັກນິກຂອງປຶ້ມທັງສາມພາກ, ແບບໜ້າປົກຂອງປຶ້ມ, ຄັດເລືອກຮູບການນໍາຂອງສອງປະເທດ ກໍຄືສອງປະທານສະພາແຫ່ງຊາດ, ບົດຄໍາເຫັນຂອງສອງປະທານສະພາແຫ່ງຊາດລາວ-ຫວຽດນາມ ແລະ ລາຍຊື່ຄະນະຮັບຜິດຊອບສ້າງປຶ້ມ; ພ້ອມນີ້, ຄະນະຊ່ຽວຊານທັງສອງຝ່າຍກໍໄດ້ກໍານົດທິດທາງການເຮັດວຽກນໍາກັນ ຈັດພິມໃຫ້ສໍາເລັດກ່ອນເດືອນກັນຍາ ເພື່ອໂຄສະນາ ແລະ ສະເຫຼີມສະຫຼອງໃນເດືອນກັນຍານີ້.

ວັນທີ 15 ສິງຫາ, ຄະນະຜູ້ແທນຂອງສະພາແຫ່ງຊາດລາວ ໄດ້ໄປຢ້ຽມຊົມຫໍພິພິທະພັນປະຫວັດສາດທະຫານ ແລະ ຢ້ຽມຢາມພື້ນຖານດ້ານເສດຖະກິດ ແລະ ວັດທະນະທໍາຈໍານວນໜຶ່ງ ຢູ່ນະຄອນຫຼວງຮ່າໂນ້ຍ.



## ປັບປຸງ...

(ຕໍ່ຈາກໜ້າ 1)

(ສພຊ) - ກອງປະຊຸມຄົ້ນຄວ້າ, ປັບປຸງເນື້ອໃນຮ່າງລັດຖະບັນຍັດວ່າດ້ວຍເຂດຍຸດທະສາດປ້ອງກັນຊາດ ໄດ້ຈັດຂຶ້ນເມື່ອວັນທີ 12 ສິງຫາຜ່ານມາທີ່ສະພາແຫ່ງຊາດ ໂດຍການເປັນປະທານຮ່ວມຂອງທ່ານ ຄໍາແພງ ວິລະພັນ ປະທານກໍາມາທິການກົດໝາຍ ແລະ ທ່ານ ພົຕ. ປອ. ວົງສັກ ພັນທະວົງ ປະທານກໍາມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ເຂົ້າຮ່ວມມີທ່ານຮອງລັດຖະມົນຕີກະຊວງປ້ອງກັນປະເທດ, ທ່ານຮອງລັດຖະມົນຕີກະຊວງຍຸຕິທໍາ, ທ່ານຮອງຫົວໜ້າຫ້ອງວ່າການສໍານັກງານປະທານປະເທດ, ຄະນະກົມ ແລະ ພະແນກ ພ້ອມດ້ວຍພະນັກງານຈາກພາກສ່ວນທີ່ກ່ຽວຂ້ອງ.

ທ່ານ ຄໍາແພງ ວິລະພັນ ກ່າວວ່າ: ຮ່າງລັດຖະບັນຍັດວ່າດ້ວຍເຂດຍຸດທະສາດປ້ອງກັນຊາດ ໄດ້ປະຕິບັດຕາມຂັ້ນຕອນຂອງການສ້າງນິຕິກໍາຢ່າງຖືກຕ້ອງ ແລະ ຄົບຖ້ວນແລ້ວ ກ່ອນທີ່ລັດຖະບານຈະສະເໜີມາຫາຄະນະປະຈໍາສະພາແຫ່ງຊາດ (ຄປຈສພຊ); ກອງປະຊຸມຄັ້ງນີ້ ຈະໄດ້ກວດກາຄືນລະອຽດ ໂດຍເລີ່ມແຕ່ມາດຕາທໍາອິດຫາມາດຕາສຸດທ້າຍ ເພື່ອຮັບປະກັນໃຫ້ເນື້ອໃນມີຄວາມຄົບຖ້ວນ, ຮັດກຸມ, ສອດຄ່ອງກັບລັດຖະທໍາມະນູນ, ກົດໝາຍ, ສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ແລະ ນິຕິກໍາອື່ນທີ່ກ່ຽວຂ້ອງ, ຮັບປະກັນໃຫ້ນິຕິກໍາສະບັບນີ້ ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

ຜູ້ເຂົ້າຮ່ວມໄດ້ຍົກສູງຄວາມຮັບຜິດຊອບ ແລະ ເປັນເຈົ້າການຄົ້ນຄວ້າ, ປະກອບຄໍາເຫັນແນໃສ່ເຮັດໃຫ້ຮ່າງລັດຖະບັນຍັດສະບັບນີ້ ມີເນື້ອໃນທີ່ສົມບູນ, ຄົບຖ້ວນຂຶ້ນຕື່ມ ເພື່ອຈະໄດ້ນໍາເຂົ້າລາຍງານຕໍ່ກອງປະຊຸມ ຄປຈສພຊ ປະຈໍາເດືອນສິງຫານີ້.

**(ອານຸສອນ ພູມມີທອນ)**




# ສື່ມວນຊົນ ກັບບົດບາດ ສ່ອງແສງປາກົດການຫຍໍ້ທໍ້

# ດັ້ນກົບເມກ

ການສະທ້ອນບັນຫາສັງຄົມຄືບົດບາດສື່ມວນຊົນຕ້ອງເຮັດ, ອີງຕາມຄຳເຫັນທ່ານທອງລຸນ ສີສຸລິດ ໃນວັນທີ 13 ສິງຫາ 2020, ເພິ່ນຍັງເນັ້ນຕື່ມໃຫ້ສື່ມວນຊົນລາວກ້າຕີຖອຍປາກົດການຫຍໍ້ທໍ້, ບັນຫາສັງຄົມ ເຊິ່ງເກີດຂຶ້ນຢ່າງຕໍ່ເນື່ອງ; ບົດບາດສື່ມວນຊົນດັ່ງທີ່ທ່ານໄດ້ມີຄຳເຫັນຫຼາຍປະເດັນໃນມື້ນັ້ນ ໃຜແດ່ທີ່ຍັງສືບຕໍ່ເຮັດ-ຍັງຈົດຈຳເອົາມາເປັນແນວທາງຂີດຂຽນແລະໃຜແດ່ພົບບັນຫາເມື່ອລາຍງານສ່ອງແສງເຖິງຄວາມຈິງ.

ສື່ມວນຊົນລາວ ຕ້ອງເປັນຜູ້ກ້າເວົ້າຄວາມຈິງ...! ຍິງຖືກເປົ້າ ສ່ອງແສງປາກົດການຫຍໍ້ທໍ້ໃນຂະບວນການພັດທະນາເສດຖະກິດ-ສັງຄົມ ຫຼື ຍັງລະເມີດລະບຽບກະຕິກາຂອງສັງຄົມ, ຕີຖອຍໃຫ້ບັນຫາເຫຼົ່ານັ້ນໃຫ້ໝົດໄປນັ້ນ ຍັງເປັນສິ່ງທ້າທາຍຕໍ່ເນື່ອງ; ປາຍປາກກາສື່ມວນຊົນລາວ ຫຼື ເຮົາຈະເຮັດເປັນພຽງຜູ້ລາຍງານຂ່າວຊື່ໆ ເຊິ່ງຖ້າວ່າເຮົາພຽງແຕ່ເຮັດລາຍງານຂ່າວ ກໍຄືງບໍ່ຕ່າງກັບສັງຄົມທີ່ມີໂທລະສັບ ກໍລາຍງານເຫດການຂຶ້ນຢູ່ໃສ? ເປັນຫຍັງ? ເສຍຫາຍແນວໃດ? ປະເດັນທີ່ຜູ້ຂຽນຢາກແລກປ່ຽນກໍຄື ຜູ້ຈັບປາກກາຂຽນລາຍງານ-ສະທ້ອນບັນຫາສັງຄົມ ຕ້ອງຈຳເປັນວິເຄາະຂ່າວ-ວິເຄາະຄົນ ແລະ ວິເຄາະສະຖານະການ ວ່າຜູ້ອ່ານຈະໄດ້ຮູ້ຫຍັງແດ່ຈາກບົດວິເຄາະຂ່າວ, ວິເຄາະບັນຫາສັງຄົມ ເພື່ອເຂົາຈະໄດ້ກຽມໂຕຮັບມືແກ້ໄຂບັນຫາທີ່ຈະເກີດຂຶ້ນໃນອະນາຄົດ. ດັ່ງນັ້ນ, ບົດບາດສື່ມວນຊົນ ຖ້າຈະສະທ້ອນປາກົດການຫຍໍ້ທໍ້ຂອງຄົນບໍ່ດີ ຫຼື ບັນຫາສັງຄົມ ຍ່ອມຕ້ອງກ້າສະແດງອອກ, ຄືດເປັນ, ຂຽນເປັນໝາຍຄວາມວ່າ ບໍ່ພຽງແຕ່ຂຽນແບບລາຍງານທີ່ເຮົາເຄີຍຊິນໃນບົດຂ່າວເທົ່ານັ້ນ.

ຜູ້ຂຽນຍົກເຫດຜົນປຽບທຽບວິທີຄິດ-ວິທີຂຽນ ສະທ້ອນບັນຫາ ກໍເພື່ອຊ່ວຍກັນປະຕິບັດໃຫ້ໄດ້ຕາມຄຳເຫັນຊີ້ນຳຂອງທ່ານ ທອງລຸນ ສີສຸລິດ ທີ່ໄດ້ມີຄຳເຫັນໄວ້ແຕ່ປີ 2020 ຜ່ານມານັ້ນ, ຄົນຈັບປາກກາ, ຄົນລາຍງານທີ່ພົບບັນຫາ ຍັງຕ້ອງໄດ້ຊອກຮຽນນຳຮຸ່ນອາວຸໂສ-ພະນັກງານບຳນານ ຜູ້ມີປະສົບການ.

ສະເໜີແລກປ່ຽນ!



## ສຈ. ປອ. ຈະເລີນ...

(ຕໍ່ຈາກໜ້າ 1)

ແຂວງປະຈຳເຂດເລືອກຕັ້ງເມືອງຫີນເຫີບ ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງເພື່ອໂຄສະນາເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 9 ຂອງ ສພຊ ຊຸດທີ IX ແລະ ສພຂ ວຽງຈັນ ຊຸດທີ II ທີ່ສະໂມສອນປົກຄອງເມືອງຫີນເຫີບ ໂດຍມີຄະນະນຳ, ພະນັກງານຫຼັກແຫຼ່ງ, ທະຫານ, ຕຳຫຼວດ ແລະ ການຈັດຕັ້ງບ້ານອ້ອມຂ້າງເມືອງ ເຂົ້າຮ່ວມຮັບຟັງຢ່າງພ້ອມພຽງ.

ທ່ານບຸນຍັງ ວົງວິລາໄຊ ຮອງປະທານຄະນະກຳມະການປົກຄອງເມືອງຫີນເຫີບ ໄດ້ລາຍງານສະພາບການຈັດຕັ້ງປະຕິບັດວຽກງານຮອບດ້ານຂອງເມືອງໃນໄລຍະ 6 ເດືອນຕົ້ນປີ 2025 ໂດຍຫຍໍ້; ຈາກນັ້ນ, ທ່ານ ບຸນສອນ ເພັດລາວັນ ໄດ້ເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 9 ຂອງ ສພຂ ວຽງຈັນ ເຊິ່ງໄດ້ພິຈາລະນາຮັບຮອງເອົາບັນຫາສຳພື້ນຖານຂອງແຂວງ ໂດຍໄດ້ອອກເປັນມະຕິ 3 ສະບັບຮັບຮອງເອົາຄື: ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຂອງແຂວງ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2025; ບົດສະຫຼຸບການເຄື່ອນໄຫວວຽກງານ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2025 ຂອງ ສພຂ ວຽງຈັນ ແລະ ການແຕ່ງຕັ້ງບຸກຄະລາກອນຂອງອົງການປົກຄອງແຂວງ ໂດຍມີການແຕ່ງຕັ້ງປະທານຄະນະກຳມະການປົກຄອງເມືອງ 11 ເມືອງ ແລະ 2 ຫົວໜ້າພະແນກການຂອງແຂວງຄື: ສຶກສາທິການ ແລະ ກິລາ ແລະ ສາທາລະນະສຸກ.

ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ໄດ້ເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 9 ຂອງ ສພຊ ເຊິ່ງໄດ້ພິຈາລະນາຮັບຮອງເອົາຫຼາຍບັນຫາສຳຄັນພື້ນຖານຂອງປະເທດຊາດ ເປັນຕົ້ນບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2025; ບົດລາຍງານກ່ຽວກັບນະໂຍບາຍຊຸກຍູ້ສົ່ງເສີມການກໍ່ສ້າງ ແລະ ສ້ອມແປງທາງໃນໄລຍະໃໝ່; ບົດລາຍງານການຈັດຕັ້ງປະຕິບັດບັນດານະໂຍບາຍ, ນິຕິກຳ, ກົນໄກຕ່າງໆ ໃນການພັດທະນາພະລັງງານໄຟຟ້າ; ບົດລາຍງານກ່ຽວກັບຜົນການສະຫຼຸບຕີລາຄາການໂຄສະນາເຜີຍແຜ່ກົດໝາຍທົ່ວປະເທດ; ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານແຕ່ກອງປະຊຸມສະໄໝສາມັນເທື່ອທີ 8 ຫາເທື່ອທີ 9 ແລະ ທິດທາງແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 10 ຂອງ ສພຊ ຊຸດທີ IX; ການສ້າງ ແລະ ປັບປຸງກົດໝາຍ 10 ສະບັບ ໃນນີ້, ສ້າງໃໝ່ 5 ສະບັບ.



## ທ່ານ ຄຳໃບ ດຳລັດ...

(ຕໍ່ຈາກໜ້າ 1)

ບັນດາໂຄງການພັດທະນາເສດຖະກິດ-ສັງຄົມ ທີ່ມີຜົນກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ແລະ ສິ່ງແວດລ້ອມ ໂດຍສະເພາະແມ່ນຜົນກະທົບຈາກໂຄງການຂຸດຄົ້ນແຮ່ທາດ ຕິດພັນກັບການຈັດຕັ້ງປະຕິບັດວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ ແລະ ເພື່ອເກັບກຳຂໍ້ມູນສະພາບຕົວຈິງຢູ່ຂົງເຂດທີ່ໄດ້ຮັບຜົນກະທົບຈາກໂຄງການພັດທະນາ, ພື້ນທີ່ທຳການຜະລິດ, ນ້ຳກິນນ້ຳໃຊ້ບໍ່ພຽງພໍ, ນິເວດວິທະຍາ, ຄວາມອຸດົມສົມບູນຂອງຊັບພະຍາກອນທຳມະຊາດ ກໍຄືການທົດແທນຄ່າເສຍຫາຍ, ການປັບປຸງຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ນຳມາວິເຄາະວິໄຈ ແລະ ສັງລວມລາຍງານຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ເພື່ອສະເໜີທິດທາງ, ວິທີການ ແລະ ມາດຕະການ ໃຫ້ລັດຖະບານ ກໍຄືຂະແໜງການທີ່ກ່ຽວຂ້ອງ ປັບປຸງແກ້ໄຂ.

ກອງປະຊຸມໄດ້ຕີລາຄາຄືນການຈັດຕັ້ງປະຕິບັດມະຕິ ສພຊ ໃນວຽກງານກະສິກຳປ່າໄມ້ ແລະ ສິ່ງແວດລ້ອມ, ອຸດສາຫະກຳ ແລະ ການຄ້າ, ແຮງງານ ແລະ ສະຫວັດດີການສັງຄົມ, ການແກ້ໄຂຊົດເຊີຍຜົນກະທົບຈາກໂຄງການພັດທະນາເມືອງທັນສະໄໝ (Smart City), ການຈັດຕັ້ງປະຕິບັດຄຳສັ່ງເລກທີ 06/ນຍ, ລົງວັນທີ 7/3/2025 ວ່າດ້ວຍການຕິດຕາມ, ກວດກາ ແລະ ການແກ້ໄຂບັນຫາແຮ່ຄຳຕົກຂ້ອນ, ຫີນ ແລະ ຊາຍ ຕາມບັນດາສາຍນ້ຳ, ຮ່ອງຫ້ວຍ ແລະ ການຄຸ້ມຄອງການຂຸດຄົ້ນແຮ່ທາດຕ່າງໆ, ການແກ້ໄຂສະພາບຄວາມບໍ່ສະຫງົບກ່ຽວກັບການຂຸດຄົ້ນແຮ່ຄຳຢູ່ຜາປົບ ເມືອງປາກອູ ແຂວງອຸດົມໄຊ, ການແກ້ໄຂຜົນກະທົບຈາກໂຄງການເຂື່ອນໄຟຟ້ານ້ຳຂອງ ຈຸດແຂວງຫຼວງພະບາງ, ການແກ້ໄຂຜົນກະທົບຈາກໂຄງການທາງລົດໄຟລາວ-ຈີນ, ການແກ້ໄຂບັນຫາສາສະໜາເພື່ອໃຫ້ມີຄວາມປອງດອງ ແລະ ສອດຄ່ອງຕາມລະບຽບກົດໝາຍ.

ນອກນັ້ນ, ທ່ານ ຄຳໃບ ດຳລັດ ພ້ອມດ້ວຍຄະນະຈາກ ສພຊ ຍັງໄດ້ອວຍພອນຜົນສຳເລັດກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກແຂວງອຸດົມໄຊ ຄັ້ງທີ X ໂດຍການຕ້ອນຮັບຈາກທ່ານ ບຸນຄົງ ຫຼ້າຈຽມພອນ ກຳມະການສຳຮອງສູນກາງພັກ, ເລຂາຄະນະບໍລິຫານງານພັກແຂວງ, ເຈົ້າແຂວງອຸດົມໄຊ, ມີຮອງເລຂາ ແລະ ບັນດາທ່ານໃນຄະນະປະຈຳພັກແຂວງເຂົ້າຮ່ວມ; ຈາກນັ້ນ, ຍັງໄດ້ໄປຢ້ຽມຊົມສູນເຕົ້າໂຮມຄ່ຽນຖ່າຍສິນຄ້າມະຫາໄຊກ, ສາງເກັບມ້ຽນສິນຄ້າ ແລະ ສະມາຄົມຜູ້ຂົນສົ່ງສິນຄ້າທາງບົກແຂວງອຸດົມໄຊ ອີກດ້ວຍ.

**(ນາງ ກຸກກິກ ບຸດດາໄຊ)**



## ກຜງສ ...

(ຕໍ່ຈາກໜ້າ 1)

ໂດຍໄດ້ພົບປະທ່ານວຽງສະຫວັດ ສີພັນດອນ ກຳມະການສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງຫຼວງນ້ຳທາ ເພື່ອແຈ້ງຈຸດປະສົງໃນການເຄື່ອນໄຫວວຽກງານຄັ້ງນີ້ ແລະ ຮັບຟັງຈຸດພິເສດການພັດທະນາເສດຖະກິດຂອງແຂວງ ພ້ອມທັງເປີດກອງປະຊຸມຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ຢູ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ເຊິ່ງມີບັນດາທ່ານສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 3, ສະມາຊິກສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າພະແນກການທີ່ກ່ຽວຂ້ອງຂອງແຂວງ ແລະ ຫົວໜ້າ-ຮອງຫົວໜ້າຂະແໜງພາຍໃນ ສພຂ ເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການລາຍງານໂດຍຫຍໍ້ຂອງພະແນກການທີ່ກ່ຽວຂ້ອງຕາມຄຳຖາມເຈາະຈີ້ມເປັນຕົ້ນການຈັດຕັ້ງປະຕິບັດວາລະແຫ່ງຊາດ ໃນ 5 ວຽກງານຈຸດສຸມຂອງວາລະແຫ່ງຊາດ ແລະ 14 ມາດຕະການທີ່ກຳນົດໃນມະຕິສະພາແຫ່ງຊາດໃນທ້ອງຖິ່ນ, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານປະຈຳປີ 2025 ຂອງແຂວງ, ການນຳເຂົ້າ-ສົ່ງອອກສິນຄ້າ, ການເກັບລາຍຮັບ; ພ້ອມດຽວກັນ, ກໍໄດ້ປະກອບຄຳຄິດເຫັນຕໍ່ຂົງເຂດແຜນການ, ການເງິນ ແລະການກວດສອບຂອງແຂວງ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ມີຄຸນນະພາບກວ່າເກົ່າ.

ໂອກາດນີ້, ທ່ານ ປອ. ລີເບີ ລີບົວປາວ ພ້ອມດ້ວຍຄະນະ ຍັງໄດ້ລົງຕິດຕາມກວດກາໂຄງການພັດທະນາກະສິກຳ, ອຸດສາຫະກຳ, ການບໍລິການ ແລະ ການທ່ອງທ່ຽວ ເຂດດ່ານປາງໄຮ, ເມືອງສິງ ໂດຍໄດ້ຮັບຟັງສະພາບການຈັດຕັ້ງປະຕິບັດໂຄງການແລະຕິດຕາມກວດກາເສັ້ນທາງປູຢາງສອງຊັ້ນແຕ່ເມືອງຫຼວງນ້ຳທາ-ເມືອງນາແລ.

**(ນາງ ວັນນີ ແຝງບົວວັນ)**



ສຸກສະບາຍຫາຍໂຣຄ

# ແຫຼ່ງໂປຣຕີນສຳລັບຄົນທີ່ຫຼຸດນ້ຳໜັກ

# ຮຽບຮຽງໂດຍ: ທິວກະທິ

"ໂປຣຕີນ" ເປັນສານອາຫານທີ່ມີກົດອະມິໂນທີ່ຈຳເປັນຕໍ່ຮ່າງກາຍ ມີໜ້າທີ່ການສ້າງຄວາມເຂັ້ມແຂງແລະຊ່ວຍໃນການເຮັດວຽກຂອງກະດູກ, ກ້າມເນື້ອ ແລະ ຜິວໜັງ; ແຕ່ທ່ານຮູ້ບໍ່ວ່າຖ້າກິນທາດໂປຣຕີນໃນທາງທີ່ຖືກ ຈະຊ່ວຍຫຼຸດນ້ຳໜັກແລະປະລິມານໄຂມັນໄດ້; ມື້ນີ້, ໃນຄໍລຳສຸກສະບາຍຫາຍໂລຄາສະບັບນີ້ ເຮົາມາຮູ້ຈັກແຫຼ່ງໂປຣຕີນທີ່ບໍ່ຄວນພາດ ດັ່ງລຸ່ມນີ້:

**1. ໄຂ່:**



ໄຂ່ອຸດົມໄປດ້ວຍສານອາການທີ່ມີຄຸນປະໂຫຍດ ແລະ ຍັງຊ່ວຍໃຫ້ທ່ານຮູ້ສຶກອີ່ມໄວຂຶ້ນ ແລະ ກິນໜ້ອຍລົງ ເຊິ່ງມັນຈະຊ່ວຍຫຼຸດປະລິມານແຄລໍຣີທີ່ກິນໄດ້ ແຕ່ຖ້າຢ້ານວ່າແຄລໍຣີທີ່ມາຈາກໄຂ່ແດງຫຼາຍເກີນໄປ ສາມາດເລືອກຮັບປະທານແຕ່ໄຂ່ຂາວໄດ້.

**2. ປາແຊວມອນ:**

ມີປະລິມານ "ໂປຣຕີນຫຼາຍ"ແລະສາມາດຍ່ອຍໄດ້ງ່າຍ ມີຄຸນປະໂຫຍດດ້ານສຸຂະພາບຫຼາຍ ເໝາະສຳລັບຄົນທີ່ຕ້ອງການຫຼຸດນ້ຳໜັກ.

**3. ເອິກໄກ່:**

ມີໄຂມັນໜ້ອຍກວ່າຊີ້ນສັດປະເພດອື່ນໆ ສຳລັບທ່ານທີ່ຕ້ອງການສ້າງກ້າມເນື້ອຫຼືຢາກຫຼຸດນ້ຳໜັກ ຈະຕ້ອງຫຼຸດອາຫານທີ່ມີໄຂມັນສູງ ຄຽງຄູ່ກັບການກິນໂປຣຕີນ ແລະ ອອກກຳລັງກາຍດັ່ງນັ້ນ,ເອິກໄກ່ຈຶ່ງເປັນອາຫານທີ່ດີທີ່ສຸດສຳລັບການການຫຼຸດນ້ຳໜັກ ແລະສ້າງກ້າມເນື້ອ.

**4. ໂຢເກີດ (ນ້ຳສົ້ມ):**

ມີຈຸລິນຊີທີ່ເປັນປະໂຫຍດຫຼາຍ ຊ່ວຍໃນການຂັບຖ່າຍ ພ້ອມທັງມີໂປຣຕີນຫຼາຍ ແລະ ງ່າຍຕໍ່ການຊອກຊື້ ລາຄາບໍ່ແພງ.

**5. ເນີຍໝາກຖົ່ວດິນ:**

ອຸດົມໄປດ້ວຍໂປຣຕີນທີ່ຊ່ວຍໃນການເສີມສ້າງ ແລະ ບຳລຸງກ້າມເນື້ອທີ່ເຊື່ອມໂຊມ; ນອກນັ້ນ, ຍັງອຸດົມໄປດ້ວຍໄຂມັນດີ ແຕ່ບໍ່ຄວນເອົາເນີຍຖົ່ວດິນມາກິນລ້າງໆ ແລະ ຄວນຮັບປະທານເນີຍຖົ່ວດິນປະມານ 2 ບ່ວງຕໍ່ມື້ເທົ່ານັ້ນ.

**6. ນົມ:**

ແຫຼ່ງໂປຣຕີນ ນົມທີ່ມີໄຂມັນຕ່ຳ ເປັນທາງເລືອກທີ່ດີເມື່ອຕ້ອງການຫຼຸດນ້ຳໜັກເຊັ່ນ: ນົມຖົ່ວເຫຼືອງ ຫຼື ນົມອາວມອນທີ່ມີແຄລໍລີ່ຕ່ຳຫຼາຍ ເມື່ອທຽບກັບນົມງົວ ພ້ອມທັງມີສານອາຫານທີ່ຊ່ວຍບຳລຸງຜິວ ບໍ່ເຮັດໃຫ້ຜິວໜັງລອກ ລວມທັງຮອຍຫ່ຽວກ່ອນໄວອັນຄວນ.

**7. ເຕົ້າຫູ້:**

ເຕົ້າຫູ້ໜຶ່ງກ້ອນໃຫ້ທາດໂປຣຕີນ ບໍ່ໜ້ອຍກວ່າຊີ້ນ ຈຶ່ງບໍ່ແມ່ນເລື່ອງແປກທີ່ຄົນກິນອາຫານເຈມັກຫັນມາຮັບປະທານເຕົ້າຫູ້ເປັນແຫຼ່ງໂປຣຕີນຫຼັກ ເພາະເຕົ້າຫູ້ຜະລິດຈາກຖົ່ວເຫຼືອງ ເຊິ່ງມີທາດໂປຣຕີນທີ່ອຸດົມສົມບູນ ຈຶ່ງສາມາດຮັບປະທານໄດ້ຢ່າງສະບາຍໃຈ.

ສະຫຼຸບລວມແລ້ວ ການຫຼຸດນ້ຳໜັກບໍ່ຄວນອົດອາຫານ ພຽງແຕ່ດັດແປງເມນູສຳລັບຮ່າງກາຍ ເພື່ອໃຫ້ຮ່າງກາຍໄດ້ຮັບສານອາຫານທີ່ເໝາະສົມກັບຮ່າງກາຍ ໂດຍສະເພາະແມ່ນໂປຣຕີນ ແລະ ສິ່ງທີ່ສຳຄັນແມ່ນຈະເຮັດໃຫ້ມ່ວນກັບການຫຼຸດນ້ຳໜັກຕື່ມອີກ.

**www.thairath.co.th**

ອາດ ກະວີລາດ

# ເມື່ອອຳນາດໃໝ່ມາມື

(ເນື່ອງໃນວັນຍຶດອຳນາດ 23 ສິງຫາ)

# ຊຽງເອງ

※ ຍຶດອຳນາດຂາດຂັ້ນ
ທີ 23 ສິງຫາ
ປວງປະຊາຊາວເຊື້ອ
ເມື່ອຫຼຸດພົ້ນຜ່ານຂ້າມ
ມາຢູ່ໃນມືແລ້ວນັ້ນ
ລືກງາມໄຊກ້າ
ດີໃຈຊົມຊື່ນ
ເມືອງຂຶ້ນຕ່າງແດນ

※ ແສນເດືອດຮ້ອນ
ປະຕິການ
ເລ່ກົນຮ້າຍ
ດາບຢູ່ເໜືອຄໍຢູ່ໃຕ້ ປະຊາທີປະໄຕແອບອ້າງ
ທົນທຸກທໍລະມານ ຄາວນັ້ນ!
ລູກມືເມືອງຂຶ້ນ
ທຳລາຍຜູ້ຄິດຕ່າງ
ວາງໄວ້ເພື່ອລວງ

※ ແມ້ງເມື່ອອຳນາດເຂົ້າ
ໝັ່ນຮັກສາດູແລ
ເປັນເຄື່ອງມືຄົມກ້າ
ປາບປາມມານໝູ່ຮ້າຍ
ເນົາຢູ່ມືປະຊາ ເຮົານັ້ນ!
ໃຫ້ແກ່ນຄົງແຂງກ້າ
ຜະເດັດການກຳມາຊີບ
ໃຫ້ຫາຍສິ້ນຈາກແຜ່ນດິນ

※ ຢ່າໃຫ້ອາຍກິ່ນຮ້າຍ
ສິ່ງກິ່ນເໝັນຄືນມາ
ສໍ້ລາດບັງຫຼວງນັ້ນ
ຕ້ອງເອົາມັນມອດມ້ຽນ
ລະບອບເນົ່າປະຕິການ
ກີດຂວາງຄວາມກ້າວ
ພົ້ນທຸກຳລະບອບເກົ່າ
ຕາຍພ້ອມລະບອບຫຼັງ

※ ທຸກຢ່າງເຮັດໃຫ້ໄດ້
ຊື່ສັດບໍລິສຸດ
ສາມັກຄີຄືເສົາຄ້ຳ
ພັກນຳພາ-ລັດຄຸ້ມຄອງຍຶດໝັ້ນ
ຄືດັ່ງປະຕິຍານ
ໂປ່ງໃສຈະແຈ້ງ
ເປັນໃຈດຽວເດັດດ່ຽວ
ເດີນໜ້າພັດທະນາ

※ ສ້າງໃຫ້ດິນຖິ່ນນີ້
ກ້າວດຸ່ງໄປຕາມຍຸກ
ສົມວ່າລາວເປັນເຈົ້າ
ລຶບລ້າງຄວາມທຸກໄຮ້ ມໍລະດົກຊົ່ວຮ້າຍ
ເຮືອງຮຸ່ງສີວິໄລ
ພັດທະນານຳໜ້າ
ດິນແດນເອກະລາດ
ນາຍເມືອງຂຶ້ນເຮັດມາ

※ ຂໍຈົ່ງເປື້ອງປິ່ນໜ້າ
ເພີ່ມທະວີກຳລັງແຮງ
ອຳນາດໃນມືແລ້ວ
ສ້າງດິນແດນຖິ່ນນີ້
ໃຈໃສ່ສາມັກຄີ
ແກ່ນແຂງຂານສູ້
ກະທຳການເດັດດ່ຽວ
ໃຫ້ທຽມເທົ່າຖິ່ນຈະເລີນ ແທ້ໆເດີ!



ພັກຫາຍ ລະບາຍ

(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)

# ສອນຫ້ຽນ

※ **ລັບ**ເດືອນເກົ້າບຸນຫໍ່ເຂົ້າປະດັບດິນ ຜ່ານພົ້ນໄປໃນມື້ວັນສິນທີ່ຜ່ານມາ ປວງປະຊາຊາວພຸດ ແຫ່ທຳບຸນສ້າງ ຕັກບາດຍາມເຊົ້າ ກາງຄືນເອົາໝາກຫໍ່ ວາງໃສ່ດິນ ລຽບຮົ້ວ ຄອງເຄົ້າສືບມາ ຝາກສົ່ງຫາພີ່ນ້ອງ ພ້ອມພໍ່ສ່ຳພະເວສີ ທີ່ຈາກກັບຄົບລະພົບ ຮັບບຸນກຸສົນສ້າງ ຝາກແມ່ທໍລະນີເອີ້ນ ເປັນຕົວແທນຢ່ຍື້ນ ປະເພນີບອກໄວ້ໃຫ້ເຮົາໄດ້ສືບມາ **ບັ້ນແລ້ວ!**

※ **ກາບ**ເປີດສົກຮຽນໃໝ່ຫຍັບໃກ້ເຂົ້າມາ ເຊິ່ງເຫັນວ່າຫຼາຍໂຮງຮຽນກໍໄດ້ ກະກຽມຄວາມພ້ອມຢ່າງຄຶກຄື້ນ ທັງພໍ່ແມ່ ແລະ ນ້ອງນັກຮຽນ ກໍເລີ່ມດຽວກັນ ພາກັນຫາຊອກຊື້ ອາພອນໃໝ່ຜືນງາມ ທັງສໍສີປາກກາ ເຄື່ອງຂຽນຮຽນແຕ້ມ ມີແຕ່ຄອງຄອຍຖ້າ **1 ກັນຍາ** ປະກາດປ່າວ ພາລູກເຂົ້າສູ່ຮົ້ວ ໂຮງຮຽນນັ້ນບ່ອນໝາຍ **ຂອບແລ້ວ!**

ຊວນຍິ້ມ

# ພົ້ງອຶ່ງ

## ເລື່ອງ: ເກືອບທຸກງວດ

ມີໄອກາງຄົນນັ່ງລົມກັບຈ່ແລຢ່າງເມົາມັນ ພ້ອມກັບຖາມກັນວ່າ:

"ຊຸມເຈົ້າກະຖືກເລກຖືກເບີຄືກະເຈົ້າຢູ່ບໍ່"

ໝູ່ຄົນໜຶ່ງຕອບ: "ເກືອບທຸກງວດ"

ໝູ່ທຸກຄົນພາກັນຕື່ນເຕັ້ນ "ທວາໆ... ມຶງເຮັດຈັ່ງໃດ ມຶງມີຂອງດີແບບໃດ ບອກພອກກູແດ່"

ລາວກະຍິ້ມແບບເຊີນໆ "ງວດອັນຈັນກະເກືອບຖືກ, ພຸດກໍເກືອບ , ວັນສຸກກໍເກື້ອບ... ຖືກ, ເກືອບທຸກງວດ"



ສຸພາສິດ-ຄະຕິເຕືອນໃຈ

# ດອກຫຍ້າ

ເຮັດຈັ່ງເພິ່ນ ແຕ່ຢ່າເຮັດຈັ່ງເພິ່ນ

ລັດຖະສະພາຕ່າງປະເທດ

# ສະພາ El Salvador ຮັບຮອງການປະຕິຮູບ, ຍົກເລີກການຈຳກັດວາລະປະທານາທິບໍດີ



(TRT) - ສະມາຊິກສະພານິຕິບັນຍັດ ແຫ່ງ ສາທາລະນະລັດ ແອນ ຊານວາດໍ ໄດ້ລົງມະຕິຮັບຮອງການປະຕິຮູບລັດຖະທຳມະນູນ ເພື່ອຍົກເລີກການຈຳກັດວາລະການດຳລົງຕຳແໜ່ງຂອງປະທານາທິບໍດີ ແລະ ອະນຸຍາດໃຫ້ນາຍິບບູເຄເລ(Nayib Bukele) ຜູ້ນຳຄົນປັດຈຸບັນ ເຊິ່ງໄດ້ຮັບການສະໜັບສະໜູນຢ່າງຖ້ວມລົ້ນໃນສະພາ ສາມາດດຳລົງຕຳແໜ່ງໂດຍບໍ່ມີກຳນົດ.

ການປະຕິຮູບນີ້ ເຊິ່ງຜ່ານການພິຈາລະນາພາຍໃຕ້ຂະບວນການທີ່ເລັ່ງລັດແລະຍັງຂະຫຍາຍວາລະການດຳລົງຕຳແໜ່ງ ຈາກ 5 ເປັນ 6 ປີ, ໄດ້ຮັບການຮັບຮອງເອົາດ້ວຍຄະແນນສຽງ 57 ຕໍ່ 3 ຈາກສະມາຊິກສະພາທັງໝົດ 60 ທີ່ນັ່ງ ເມື່ອວັນພະຫັດທີ 31 ກໍລະກົດຜ່ານມາ; ຂໍ້ສະເໜີດັ່ງກ່າວ ຍັງລວມເຖິງການລົບລ້າງການເລືອກຕັ້ງຮອບທີສອງທີ່ສອງຜູ້ໄດ້ຮັບຄະແນນສຽງສູງສຸດຈາກຮອບທຳອິດຈະຕ້ອງປະເຊີນໜ້າກັນ.

ບູເຄເລ ອາຍຸ 44 ປີ ດຳລົງຕຳແໜ່ງປະທານາທິບໍດີຕັ້ງແຕ່ປີ 2019 ແລະ ໄດ້ຮັບການເລືອກຕັ້ງຄືນໃໝ່ໃນປີ 2024 ດ້ວຍຄະແນນສຽງສ່ວນຫຼາຍທີ່ຖ້ວມລົ້ນ.

# ກຳມາທິການລັດຖະສະພາອີຣານ ອະນຸມັດຕັດເລກສູນ 4 ໂຕ ອອກຈາກສະກຸນເງິນຂອງຊາດ




(Xinhua) - ກຳມາທິການເສດຖະກິດຂອງລັດຖະສະພາອີຣານ ໄດ້ຜ່ານມະຕິໃນກອງປະຊຸມເມື່ອວັນອາທິດທີ 3 ສິງຫາຜ່ານມາ ໃຫ້ຕັດເລກສູນ 4 ໂຕ ອອກຈາກສະກຸນເງິນຂອງຊາດ ເຊິ່ງກໍຄືເງິນຣຽວ (rial), ຕາມການລາຍງານຂອງສຳນັກຂ່າວ IRNA ໂດຍອ້າງອີງຄຳເວົ້າຂອງ ຊຳເຊດດິນ ຮອສເຊນີ (Shamseddin Hosseini) ປະທານກຳມາທິການດັ່ງກ່າວ.

ການດຳເນີນການດັ່ງກ່າວແນໃສ່ປັບປຸງປະສິດທິພາບຂອງທຸລະກຳທາງການເງິນ, ຮື້ຟື້ນແຜນການທີ່ຖືກລະງັບໄວ້ໂດຍລັດຖະບານຂອງອະດີດປະທານາທິບໍດີຮັສຊັນ ໂຣຮານີ(Hassan Rouhani) ໃນປີ 2019, ຕາມຄຳກ່າວຂອງ ຮອສເຊນີ.

ການລາຍງານຂອງ IRNA ລະບຸວ່າສະກຸນເງິນຂອງຊາດຂອງອີຣານ ຈະສືບຕໍ່ເອີ້ນວ່າ ຣຽວ ແລະ 1 ຣຽວ ຈະເທົ່າກັບ 10,000 ຣຽວ ຕາມມູນຄ່າປັດຈຸບັນ ແລະ ຈະແບ່ງອອກເປັນ 100 ເກຣັນ (gheran ຫຼື ໜ່ວຍຍ່ອຍ).

ຟາເຕເມ ໂມຮາເຈຣານີ (Fatemeh Mohajerani) ໂຄສົກລັດຖະບານ ຖະແຫຼງເມື່ອວັນທີ 10 ສິງຫາວ່າ ຄະນະລັດຖະມົນຕີ ໄດ້ອະນຸມັດໃຫ້ນຳເລກສູນ4ໂຕອອກຈາກສະກຸນເງິນຂອງຊາດ, ນາງປະກາດເລື່ອງນີ້ຕໍ່ສື່ມວນຊົນລະຫວ່າງກອງປະຊຸມຄະນະລັດຖະມົນຕີພ້ອມຢໍ້າວ່າຂະບວນການນຳເລກສູນອອກຈະໃຊ້ເວລາດົນ ແລະ ຈະໃຊ້ສະກຸນເງິນ 2 ສະກຸນໃນໄລຍະໜຶ່ງ ໂດຍບໍ່ໄດ້ໃຫ້ລາຍລະອຽດເພີ່ມ.

ການເຄື່ອນໄຫວນີ້ ຍັງບໍ່ໄດ້ຮັບການອະນຸມັດຈາກລັດຖະສະພາ ແລະ ສະພາລັດຖະທຳມະນູນ.

# ສະພາ ສ.ເກົາຫຼີ ຍົກເລີກສະຖານະທາງກົດໝາຍ "ປຶ້ມແບບຮຽນ AI"




(The straits times) - ສະພາແຫ່ງຊາດ ສ.ເກົາຫຼີ ໄດ້ລົງມະຕິຍົກເລີກການຮັບຮູ້ທາງກົດໝາຍຂອງປຶ້ມແບບຮຽນທີ່ພັດທະນາໂດຍການໃຊ້ປັນຍາປະດິດ.

ວັນທີ4 ສິງຫາຜ່ານມາ, ສະພາແຫ່ງຊາດ ສ.ເກົາຫຼີ ໄດ້ຜ່ານຮ່າງກົດໝາຍການຍົກເລີກສະຖານະທາງກົດໝາຍຂອງປຶ້ມແບບຮຽນດີຈິຕອນທີ່ໃຊ້ປັນຍາປະດິດ ຫຼື ເອໄອ (artificial intelligence - AI) ໃນຖານະສື່ການສອນຢ່າງເປັນທາງການ.

ການປັບປຸງກົດໝາຍດັ່ງກ່າວ ຈະຈຳກັດຄຳນິຍາມທາງກົດໝາຍຂອງປຶ້ມແບບຮຽນໃຫ້ໝາຍເຖິງສະເພາະໜັງສືທີ່ພິມຕາມປົກກະຕິແລະໜັງສືເອເລັກໂຕຣນິກ ຫຼື "e-books" ແຕ່ບໍ່ລວມ"ຊອບແວສະໜັບສະໜູນການຮຽນຮູ້ທີ່ໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານອັດສະລິຍະ"ໝາຍຄວາມວ່າ ປຶ້ມແບບຮຽນທີ່ຈັດທຳໂດຍເອໄອ ຈະຖືກຈັດປະເພດເປັນພຽງສື່ການສຶກສາປະເພດໜຶ່ງເທົ່ານັ້ນ, ບໍ່ແມ່ນປຶ້ມແບບຮຽນຢ່າງເປັນທາງການທີ່ຖືກຮັບຮູ້ໂດຍກົດໝາຍ.

ໂຄງການປຶ້ມແບບຮຽນຈາກເອໄອ ເປັນໜຶ່ງໃນນະໂຍບາຍປະຕິຮູບການສຶກສາຂອງລັດຖະບານກ່ອນໜ້ານີ້ ເຊິ່ງນຳໂດຍປະທານາທິບໍດີ ຢຸນ ຊອກ ຢອນ (Yoon Suk Yeol) ທີ່ມີຈຸດປະສົງເພື່ອສະໜອງປະສົບການການຮຽນຮູ້ທີ່ປັບໃຫ້ເໝາະສົມສຳລັບນັກຮຽນແຕ່ລະຄົນໂດຍໃຊ້ເອໄອຂັ້ນສູງ, ມີການຈັດສັນງົບປະມານໃຫ້ໂຄງການນີ້ສູງເຖິງ 533.3 ຕື້ວອນ (ປະມານ 496 ລ້ານໂດລາ)ເມື່ອປີຜ່ານມາພຽງປີດຽວ.

ກະຊວງສຶກສາທິການນຳໃຊ້ປຶ້ມແບບຮຽນເອໄອ ໃນພາກຮຽນທີ I ປີ 2025 ທົດລອງການສອນພາສາອັງກິດ ແລະ ຄະນິດສາດ ໃຫ້ແກ່ນັກຮຽນຊັ້ນປະຖົມສຶກສາປີທີ3ແລະ4ແລະພາສາອັງກິດ, ຄະນິດສາດ ແລະ ວິທະຍາສາດຄອມພິວເຕີໃນຊັ້ນມັດທະຍົມສຶກສາຕອນຕົ້ນແລະຕອນປາຍທ່າມກາງສຽງຕໍ່ຕ້ານ ແລະ ຕຳໜິຕິຕຽນຢ່າງກວ້າງຂວາງຈາກຄູຜູ້ສອນ ແລະ ຜູ້ປົກຄອງເປັນຈຳນວນຫຼາຍ.

ທາງກະຊວງສຶກສາທິການ ຍັງບໍ່ທັນໄດ້ສະເໜີແຜນງານທີ່ເປັນຮູບປະທຳໃນການຢຸດຕິໂຄງການປຶ້ມແບບຮຽນເອໄອ, ແຕ່ຈະອອກຄຳແນະນຳຊີ້ແຈງເພື່ອປ້ອງກັນບໍ່ໃຫ້ທຸກຝ່າຍເກີດຄວາມສັບສົນ.

# ນາຍົກລັດຖະມົນຕີລັດ Victoria ຊຸກຍູ້ "Work From Home" ເປັນກົດໝາຍ



(AFP) - ນາງ ຈາຊິນຕາ ອັລລັນ (Jacinta Allan) ນາຍົກລັດຖະມົນຕີລັດວິກຕໍເຣຍຂອງອົດສະຕຣາລີ ປະກາດເມື່ອວັນເສົາທີ 2 ສິງຫາຜ່ານມາ ທີ່ຈະຊຸກຍູ້ໃຫ້ "ການເຮັດວຽກຢູ່ເຮືອນ" ເປັນສ່ວນໜຶ່ງຂອງກົດໝາຍ ໂດຍໃຫ້ເຫດຜົນວ່າ ມັນຄວນຈະເປັນ"ສິດ,ບໍ່ແມ່ນການຮ້ອງຂໍ";ພາຍໃຕ້ແຜນການຂອງອັລລັນ, ຄົນງານຈະມີສິດເຮັດວຽກຢູ່ເຮືອນຢ່າງໜ້ອຍ 2 ວັນຕໍ່ອາທິດ ຫາກຕຳແໜ່ງງານມີຄວາມເໝາະສົມກັບແນວທາງດັ່ງກ່າວ.

"ພວກເຮົາກຳລັງເຮັດສິ່ງນີ້ ເພາະມີຫຼັກຖານສະແດງໃຫ້ເຫັນວ່າ ຄົນງານມີປະສິດທິຜົນສູງຂຶ້ນ, ມີເວລາໃຫ້ກັບຄອບຄົວຫຼາຍຂຶ້ນ ແລະ ປະຫຍັດເງິນສຳລັບຄອບຄົວຫຼາຍຂຶ້ນ ເຊິ່ງການປ່ຽນແປງນີ້ໝາຍຄວາມວ່າ ຄົນງານທຸກຄົນທີ່ສາມາດເຮັດວຽກທາງໄກໄດ້ຢ່າງສົມເຫດສົມຜົນ ມີສິດທີ່ຈະເຮັດວຽກຢູ່ເຮືອນຢ່າງໜ້ອຍ 2 ວັນຕໍ່ອາທິດ." ອັລລັນກ່າວໃນການເປີດຕົວນະໂຍບາຍທີ່ສະເໜີໃນກອງປະຊຸມລະດັບລັດຂອງພັກແຮງງານ.

ອັລລັນ ກ່າວວ່າ ນະໂຍບາຍນີ້ ຈະໄດ້ຮັບການປຶກສາຫາລືກັບຜູ້ອອກແຮງງານ, ນາຍຈ້າງ ແລະສະຫະພັນແຮງງານທັງເນັ້ນໜັກເຖິງຄວາມສຳຄັນຂອງການໃຫ້ລາຍລະອຽດກ່ຽວກັບການປ່ຽນແປງທີ່ສຳຄັນນີ້ຢ່າງຖືກຕ້ອງ. ອັລລັນ ກ່າວຕື່ມວ່າ: ມາດຕະການນີ້ ຈະຊ່ວຍໃຫ້ຄົນງານທົ່ວໄປປະຫຍັດເງິນໄດ້ສະເລ່ຍ 110 ໂດລາຕໍ່ອາທິດ, ຫຼຸດບັນຫາການຈະລາຈອນແອອັດຕາມທ້ອງຖະໜົນ ແລະ ຮັກສາແມ່ຍິງໃຫ້ຢູ່ໃນກຳລັງແຮງງານຫຼາຍຂຶ້ນ.

ມາດຕະການດັ່ງກ່າວ ມີທ່າອຽງທີ່ຈະຖືກນຳເຂົ້າພິຈາລະນາຢູ່ລັດຖະສະພາໃນປີໜ້າ.

# ແກ່ສ່ຽງພັບສິ່ງແວດລ້ອມ ດ້ວຍການເພີ່ມສີຂຽວ

❖ ວິເສດ ສະແຫວງສຶກສາ

ພາຍໃຕ້ຫົວຂໍ້ຂອງບົດປະຈຳວັນນີ້ ຂໍສະເໜີສອງເຫດການທີ່ໜ້າສົນໃຈຄື ແຜນປູກຕົ້ນໄມ້ຂອງອິນໂດເນເຊຍ ໃຫ້ໄດ້ 10 ລ້ານຕົ້ນ ໃນ 10 ປີຕໍ່ໜ້າ (ໂດຍເລີ່ມແຕ່ວັນສ້າງຕັ້ງອາຊຽນຄົບຮອບ 54 ປີ (8/8/1967-8/8/2021) ໝາຍຄວາມວ່າອິນໂດເນເຊຍ ຈະປູກຕົ້ນໄມ້ໃຫ້ໄດ້ 10 ລ້ານຕົ້ນ ໃນ 10 ປີ ນັບແຕ່ວັນທີ 8/8/2021 ເປັນຕົ້ນໄປ. ຂ່າວນີ້ໄດ້ໃຫ້ລາຍລະອຽດເພີ່ມຕື່ມວ່າ ສູນຊີວະນານາພັນອາຊຽນ ທີ່ ອິນໂດເນເຊຍ ໄດ້ສົມທົບກັບສຳນັກງານກອງເລຂາອາຊຽນ ແລະ ທາງການອິນໂດເນເຊຍ ເລີ່ມຕົ້ນປະຕິບັດຂໍ້ລິເລີ່ມ "ອາຊຽນສີຂຽວ" (AGI) ໂດຍມີເປົ້າໝາຍຟື້ນຟູ ແລະ ປູກຕົ້ນໄມ້ໃຫ້ໄດ້ຢ່າງໜ້ອຍ 10 ລ້ານຕົ້ນ ໃນ 10 ປີຕໍ່ໜ້າ ຢູ່ພື້ນທີ່ຂອງອາຊຽນ, ຂໍ້ລິເລີ່ມດັ່ງກ່າວສອດຄ່ອງກັບເປົ້າໝາຍຂອງທົດສະວັດຟື້ນຟູລະບົບຊີວະພາບຂອງສະຫະປະຊາຊາດ (ຄືແຕ່ໄລຍະ2021-2030 ເຊິ່ງເປັນທົດສະວັດທີ 3 ຂອງສະຕະວັດທີ 21); ທົດສະວັດຟື້ນຟູລະບົບຊີວະພາບຂອງອົງການສະຫະປະຊາຊາດດັ່ງກ່າວ ມີເປົ້າໝາຍຫັນເປັນສີຂຽວໃນທົ່ວໂລກ ແນໃສ່ປົວແປງຊີວິດການເປັນຢູ່, ການຊອກຫາລາຍໄດ້ເພື່ອລ້ຽງຊີບຂອງປະຊາກອນໃນປະເທດຕ່າງໆ. ປະຊາກອນໃນອາຊຽນ ຍັງອາໄສຄວາມອຸດົມສົມບູນຂອງຊີວະນານາພັນ ແລະ ປ່າໄມ້ເປັນຕົ້ນຕໍ ການເຄື່ອນໄຫວໃນຂອບທົດສະວັດຟື້ນຟູລະບົບຊີວະພາບຂອງອົງການ ສປຊ ນີ້ ແມ່ນຄວາມຮຽກຮ້ອງລວມຂອງວົງຄະນາຍາດສາກົນ ເພື່ອບໍ່ໃຫ້ລະບົບຊີວະພາບຂອງໂລກຕົກຢູ່ໃນສະພາບເສື່ອມໂຊມ ທັງເປັນການລຶບລ້າງຄວາມອຶດຫິວ, ຕ້ານການປ່ຽນແປງຂອງດິນຟ້າອາກາດ, ປ້ອງກັນບໍ່ໃຫ້ພັນພືດ ແລະ ສັດປ່າສູນພັນ; ສະນັ້ນ, ເພື່ອປະຕິບັດເປົ້າໝາຍທົດສະວັດຂອງອົງການ ສປຊ, ບັນດາປະເທດສະມາຊິກອາຊຽນ ຕ້ອງເຮັດໃຫ້ຂໍ້ລິເລີ່ມ "ອາຊຽນສີຂຽວ" ກາຍເປັນຈິງ ດ້ວຍການຫັນຂໍ້ລິເລີ່ມເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ໂດຍມີມາດຕະການທາງກົດໝາຍເປັນໄມ້ງັດຊຸກຍູ້ຢ່າງຈິງຈັງ.

ສຳລັບເຫດການທີ 2 ພາຍໃຕ້ຫົວຂໍ້ຂອງບົດນີ້ນັ້ນ ແມ່ນຂ່າວກ່ຽວກັບລະບົບການປຸກສ້າງຢູ່ປະເທດຕວັກກີ ທີ່ນຳໃຊ້ວັດຖຸທີ່ເປັນມິດກັບສິ່ງແວດລ້ອມ; ບໍລິສັດທີ່ຄົ້ນພົບການນຳໃຊ້ວັດຖຸທີ່ວ່ານີ້ ຊື່ບໍລິສັດ ກໍ່ສ້າງ ດໍເຊ ປູ໌ຟາບູ໊ກ, ວັດຖຸເປັນມິດກັບສິ່ງແວດລ້ອມທີ່ບໍລິສັດນີ້ນຳໃຊ້ກໍຄືໂຄງເຫຼັກທີ່ຜະລິດສຳເລັດຮູບແລ້ວ ຍົກມາປະກອບໃສ່ການປຸກສ້າງຕຶກອາຄານ ເຊິ່ງນອກຈາກເປັນການປະຢັດແລ້ວ ຍັງຊ່ວຍຫຼຸດຜ່ອນຈຳນວນຂີ້ເຫຍື້ອຈາກການປຸກສ້າງ. ຕົວຢ່າງການປຸກສ້າງຕຶກອາຄານ ຫຼື ຫ້ອງການແບບເກົ່າ ທີ່ມີຂະໜາດ 2,300 ຕາແມັດນັ້ນ ຈະເຮັດໃຫ້ມີສິ່ງເສດເຫຼືອທີ່ກາຍເປັນຂີ້ເຫຍື້ອຫຼາຍເຖິງ 45 ໂຕນ, ແຕ່ຖ້ານຳໃຊ້ວິທີປຸກສ້າງແບບໃໝ່ ຂີ້ເຫຍື້ອຈາກເສດວັດຖຸກໍ່ສ້າງກໍຈະມີປະມານ 800 ກິໂລກຼາມເທົ່ານັ້ນ; ຕຶກອາຄານທີ່ສ້າງດ້ວຍວັດຖຸແບບເກົ່ານັ້ນ ເມື່ອຖືກທຸບ ຫຼື ມ້າງກໍຈະສ້າງກອງຂີ້ເຫຍື້ອປະມານ 90%, ແຕ່ຖ້າທຸບ ຫຼື ມ້າງຕຶກທີ່ກໍ່ສ້າງດ້ວຍວັດຖຸທີ່ເປັນມິດກັບສິ່ງແວດລ້ອມ ກໍຈະມີຂີ້ເຫຍື້ອໜ້ອຍທີ່ສຸດ. ໂຄງເຫຼັກທີ່ບໍລິສັດ ດໍເຊ ປູ໌ຟາບູ໊ກ ນຳໃຊ້ເຂົ້າໃນການກໍ່ສ້າງນັ້ນ ໄດ້ມາຈາກຕູ້ຄອນເທເນີເກົ່າ ທີ່ໃຊ້ບັນທຸກສິນຄ້າ. ການສ້າງຕຶກອາຄານດ້ວຍໂຄງເຫຼັກນີ້ທົນທານ, ບໍ່ເປືອງພະລັງງານ, ມີສຽງລົບກວນໜ້ອຍ; ເມື່ອທຸບຕຶກ ກໍຍັງສາມາດເອົາໂຄງເຫຼັກນຳໄປໃຊ້ໃໝ່ໄດ້. ຂ່າວບອກວ່າ ໃນປັດຈຸບັນ, ປະເທດຕວັກກີ ໄດ້ມີກົດໝາຍສະບັບໃໝ່ທີ່ກຳນົດໃຫ້ນຳໃຊ້ໂຄງເຫຼັກທີ່ເປັນມິດກັບສິ່ງແວດລ້ອມ ເຂົ້າໃນການກໍ່ສ້າງຕຶກອາຄານໃນທົ່ວປະເທດແລ້ວ.



\#ບ່າວກະບື

ດີ: "ທ່ານໝໍເວົ້າວ່າ ຊິເຮັດໃຫ້ເຮົາຍ່າງໄດ້ພາຍໃນສອງອາທິດ"
ເຕີມ: "ແລ້ວລາວເຮັດໄດ້ຄືວ່າແທ້ຫວະ?"
ດີ: "ໄດ້, ເພາະເຮົາຕ້ອງໄດ້ຂາຍລົດເພື່ອຈ່າຍຄ່າປິ່ນປົວ"

\#BAOKBU

Dy: "The doctor said he would have me on my feet in two weeks."
Term: "And did he ? "
Dy: "Yes, I had to sell the car to pay the bill."



ພູໝົດປ່າ ພາຍຸມາ ນ້ຳເລີຍຖ້ວມ

● ໂດຍ : ພູຜາ




## ສພຂ...

(ຕໍ່ຈາກໜ້າ 8)

ໄຊ, ທ່ານ ສັນຕິໄຊ ສີລີໄຊ ເປັນປະທານຄະນະກຳມະການປົກຄອງເມືອງສະໜາມໄຊ ແລະ ທ່ານຄູນສະຫວັນ ເວັນມະສອນ ເປັນປະທານຄະນະກຳມະການປົກຄອງເມືອງສາມັກຄີໄຊ.

ໄລຍະການດຳເນີນກອງປະຊຸມ, ມີຜູ້ມີສິດເລືອກຕັ້ງ ສົ່ງຄຳຄິດຄຳເຫັນຜ່ານໂທລະສັບສາຍດ່ວນ ໝາຍເລກ 036 156 ທັງໝົດ 8 ສາຍ, ບັນຫາພົ້ນເດັ່ນແມ່ນຂໍ້ຂັດແຍ້ງເນື້ອທີ່ດິນ; ຕໍ່ກັບບັນຫາທີ່ສົ່ງມາ, ກອງເລຂາກອງປະຊຸມໄດ້ສັງລວມ ແລະ ມອບໃຫ້ຄະນະກຳມະການຂອງ ສພຂ ປະສານສົມທົບພາກສ່ວນກ່ຽວຂ້ອງ ເພື່ອຄົ້ນຄວ້າ ແລະ ຊີ້ແຈງເປັນລາຍລັກອັກສອນ, ຮັບປະກັນໄດ້ຄວາມຖືກຕ້ອງສອດຄ່ອງຕາມກົດໝາຍ ແລະ ລະບຽບການ.

**(ວິນັດ ສີສຸລາດ)**

ທະນາຄານພັດທະນາລາວ
LDB Bank

**ຜູ້ຊີ້ນຳ**
ທ່ານ ສົງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ

**ຄະນະບັນນາທິການ**
ທ່ານ ປອ. ພົດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລົມ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລົມ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ

**ຮູບພາບປະກອບ**
ທ່ານ ສອນສັກ ວັນວິໄຊ